ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະອຳນວຍການ	3
ບົດລາຍງານການທົບທວນຄືນເອກະສານລາຍງານການເງິນການປີແບບສັງລວມ ແລະ ແບບແຍກກິດຈະການ	4 - 5
ໃບລາຍງານຖານະການເງິນການປີແບບສັງລວມ ແລະ ແບບແຍກກິດຈະການ	6 - 7
ໃບລາຍງານຜົນການດຳເນີນງານການປີແບບສັງລວມ ແລະ ແບບແຍກກິດຈະການ	8
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີແບບສັງລວມ ແລະ ແບບແຍກກິດຈະການ	9 - 10
ໃບລາຍງານກະແສເງິນສົດການປີແບບສັງລວມ ແລະ ແບບແຍກກິດຈະການ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນການປີແບບສັງລວມ ແລະ ແບບແຍກກິດຈະການ	13 - 49

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ ("ບໍລິສັດ"), ບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ ("ຟຟລ"), ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ໄດ້ດຳເນີນກິດຈະການ ແລະ ຕັ້ງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ບໍລິສັດໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນໂດຍ ກະຊວງອຸດ ສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 ("ວັນສ້າງຕັ້ງບໍລິສັດ") ເຊິ່ງໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດເລກທີ 1180/ຈວທ ລົງວັນທີ 8 ມິຖຸນາ 2022 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.

ບໍລິສັດໄດ້ຈົດທະບຽນໂດຍເລີ່ມຈາກ ລັດວິສາຫະກິດໄຟຟ້າລາວ ເຊິ່ງຕິດພັນກັບການປັບປຸງໂຄງສ້າງທຸລະກິດພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດ ແລະ ພັນທະສະເພາະດ້ານໃດດ້ານໜຶ່ງໃຫ້ແກ່ບໍລິສັດ ອີງຕາມຂໍ້ຕົກລົງຂອງສຳນັກ ງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນ ໂຄງການໂຮງງານໄຟຟ້າອິດສະຫຼະ ("IPP") ໃຫ້ກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ວັນສ້າງຕັ້ງບໍລິສັດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງເຂື່ອນໄຟຟ້າ 7 ແຫ່ງ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລິກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ແລະ ເຂື່ອນເຊລະບ່ຳ ຕາມມູນຄ່າສຸດທິ ນະວັນທີ 20 ຕຸລາ 2010 ໃຫ້ບໍລິສັດ ເປັນຈຳນວນເງິນ 2,605,792 ລ້ານກີບ. ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ ເລີ່ມການດຳເນີນງານການຜະລິດໄຟຟ້າຂອງຕົນໂດຍ ສ່ວນໃຫຍ່ແມ່ນອີງຕາມການໂອນຍ້າຍຊັບສິນດັ່ງກ່າວ ເພື່ອສະໜອງໄຟຟ້າທີ່ ຜະລິດໄດ້ຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້ - ຂາຍພະລັງງານ ("PPA").

ໃນໄລຍະຕໍ່ມາ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮຸ້ນສ່ວນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ຂໍ້ມູນທາງການເງິນນີ້ ໄດ້ຮັບອະນຸມັດອອກໂດຍຄະນະກຳມະການສະພາຜູ້ບໍລິຫານ ໃນວັນທີ 29 ສິງຫາ 2025.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບໄລຍະສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ນະວັນທີອອກບົດລາຍງານສະບັບນີ້ແມ່ນ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານ	ແຕ່ງຕັ້ງຄືນໃໝ່ວັນທີ 31 ມີນາ 2025
ທ່ານ ປອ. ອາຄົມເດດ ວົງໄຊ	ຮອງປະທານ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ສຸກສະຫວາດ ໂສສຸພັນ	ສະມາຊິກ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ຊິນລະວົດ ວິນິດໄສ	ສະມາຊິກ	
ທ່ານ ວິເລດ ກິນນາວົງ	ສະມາຊິກ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ພັນປານີ ສິດທິລາດ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ປະສົມພັດ ຄຳຕັນ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ສົມພິດ ແກ້ວວິຈິດ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ຄຳມຸນ ວິພົງໄຊ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ດາວວຽງ ສຸນັນທະລາດ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ປອ. ບຸນແທນ ຈັນສະໄໝ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ຄຳແກ້ວ ວິສີສົມບັດ	ສະມາຊິກ	ລາອອກວັນທີ 31 ມີນາ 2025
ທ່ານ ປອ. ພັນປະກິດ ອ່ອນພັນດາລາ	ສະມາຊິກ	ລາອອກວັນທີ 31 ມີນາ 2025

ຄະນະຜູ້ອຳນວຍການ

ສະມາຊິກຄະນະອຳນວຍການ ສຳລັບໄລຍະສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ນະວັນທີອອກບົດລາຍງານສະບັບນີ້ແມ່ນ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ສຸກສະຫວາດ ໂສສຸພັນ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ດາວວຽງ ສຸນັນທະລາດ	ຮອງຜູ້ອຳນວຍການໃຫຍ່ ສາຍງານພັດທະນາທຸລະກິດ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ຄຳໃບ ຫຼວງໄຊ	ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ໂພຄົນ ອັບໄພ	ຮອງຜູ້ອຳນວຍການໃຫຍ່ ສາຍງານບໍລິຫານ	ແຕ່ງຕັ້ງວັນທີ 31 ມີນາ 2025
ທ່ານ ສີລິພົມ ແສງອ່ອນແກ້ວ	ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ	ແຕ່ງຕັ້ງວັນທີ 31 ມີນາ 2025

ຕິວແທນທາງດ້ານກົດໝາຍ

ຕິວແທນທາງດ້ານກົດໝາຍຂອງບໍລິສັດ ນັບແຕ່ວັນທີ 1 ມັງກອນ 2025 ຫາ 30 ມິນາ 2025 ແມ່ນ ທ່ານ ດາວວຽງ ສຸນັນທະລາດ, ຮັກສາການຜູ້ອຳນວຍການໃຫຍ່ ແລະ ນັບແຕ່ວັນທີ 31 ມີນາ 2025 ຈົນເຖິງວັນທີອອກບົດລາຍງານສະບັບນີ້ແມ່ນ ທ່ານ ສຸກສະຫວັດ ໂສສຸພັນ, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງບໍລິສັດ ຜະລິດ - ໄຟຟ້າ ລາວ ມະຫາຊົນ ("ຜ-ຟຟລ" ຫຼື "ບໍລິສັດ") ມີຄວາມຍິນດີນຳສະເໜີເອກະສານລາຍງານການເງິນກາງປີແບບສັງລວມ ແລະ ເອກະສານລາຍງານການເງິນກາງປີແບບແຍກກິດຈະການຂອງບໍລິສັດ ແລະ ບັນດາບໍລິສັດໃນເຄືອຂອງຕົນເອງ ("ກຸ່ມບໍລິສັດ") ນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025 ("ເອກະສານລາຍງານການເງິນກາງປີ ແບບສັງລວມ ແລະ ແບບແຍກກິດຈະການ").

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ແບບສັງລວມ ແລະ ແບບແຍກກິດຈະການ (ເອີ້ນລວມແມ່ນ "ເອກະສານລາຍງານການເງິນ") ທີ່ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນ. ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະອຳນວຍການຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຂໍ້ມູນທີ່ມີສາລະສຳຄັນແມ່ນໄດ້ຖືກເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນກາງປີ; ແລະ
- ກະກຽມເອກະສານລາຍງານການເງິນກາງປີບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດ ຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະອຳນວຍການ ມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ຮັບການເປີດເຜີຍຕາມຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາ, ກ່ຽວກັບຖານະທາງການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າການລົງບັນຊີ ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະອຳນວຍການມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນ ບໍລິສັດໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການຂໍຖືເປັນກຽດຖະແຫຼງວ່າ, ໃນຄຳເຫັນຂອງຕົນ, ເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການທີ່ໄດ້ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

ຕາງໜ້າຄະນະອຳນວຍການ:

ທ່ານ ສຸກສະຫວາດ ໄສສຸພັນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

Building a better working world

ເລກທີອ້າງອີງ: 69180248/12202013LR

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ

ຮຽນ: ຜູ້ຖືຮຸ້ນ ບໍລິສັດ ຜະລິດ - ໄຟຟ້າ ລາວ ມະຫາຊົນ ທີ່ນັບຖື

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນກາງປີແບບສັງລວມຂອງບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ") ແລະ ເອກະສານລາຍງານການເງິນກາງປີແບບແຍກກິດຈະການຂອງບໍລິສັດ ແລະ ບັນດາບໍລິສັດໃນເຄືອ ("ກຸ່ມບໍລິສັດ"), ເຊິ່ງ ປະກອບດ້ວຍເອກະສານລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ ນະວັນທີ 30 ມິຖຸນາ 2025, ໃບລາຍງານ ຜົນການດຳເນີນງານກາງປີແບບສັງລວມ ແລະ ແບບແຍກກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ ແບບສັງລວມ ແລະ ແບບ ແຍກກິດຈະການ ແລະ ໃບລາຍງານກະແສເງິນສົດກາງປີ ແບບສັງລວມ ແລະ ແບບແຍກກິດຈະການ ແລະ ບົດອະທິບາຍຊ້ອນທ້າຍເອກະສານ ລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ, ລວມທັງສະຫຼຸບກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ (ເອີ້ນລວມແມ່ນ "ເອກະສານລາຍງານການເງິນສຳລັບກາງປີ").

ຄວາມຮັບຜິດຊອບຂອງຄະນະອຳນວຍການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ແລະ ຂໍ້ກຳນົດດ້ານກົດໝາຍທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີບົດລາຍງານການເງິນ ກາງປີ ແບບສັງລວມ ແລະ ແບບແຍກກິດຈະການ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍເຫັນວ່າ ມີ ຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນກາງປີ ແບບສັງລວມ ແລະ ແບບແຍກກິດຈະການ ໃຫ້ມີຄວາມຖືກຕ້ອງຕາມ ຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ຄວາມຮັບຜິດຊອບຂອງນັກກວດສອບບັນຊີ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນການສະຫຼຸບຕໍ່ກັບເອກະສານລາຍງານການເງິນກາງປີ ໂດຍອີງໃສ່ການທົບທວນຄືນຂອງພວກ ຂ້າພະເຈົ້າ. ພວກຂ້າພະເຈົ້າດຳເນີນການທົບທວນຄືນໂດຍສອດຄ່ອງກັບ ມາດຕະຖານສາກົນໃນການທົບທວນຄືນ 2410, "ການທົບທວນຄືນ ຂໍ້ມູນດ້ານການເງິນໂດຍຜູ້ກວດສອບອິດສະຫຼະຂອງນິຕິບຸກຄົນ"

ການທົບທວນຄືນຂອງເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ ປະກອບດ້ວຍການສອບຖາມ, ໂດຍ ສະເພາະແມ່ນບຸກຄົນທີ່ຮັບຜິດຊອບດ້ານການເງິນ ແລະ ບັນຊີ, ແລະ ໂດຍການນຳໃຊ້ຂັ້ນຕອນການວິເຄາະ ແລະ ການທົບທວນຄືນອື່ນໆ. ການທົບທວນຄືນແມ່ນມີຂອບເຂດໜ້ອຍກວ່າການກວດສອບທີ່ດຳເນີນຕາມມາດຕະຖານສາກົນກ່ຽວກັບການກວດສອບ ແລະ, ດ້ວຍເຫດ ນັ້ນ, ຈຶ່ງບໍ່ໄດ້ຊ່ວຍໃຫ້ພວກຂ້າພະເຈົ້າໄດ້ຮັບການຮັບປະກັນວ່າພວກຂ້າພະເຈົ້າຈະຮູ້ເຖິງທຸກບັນຫາທີ່ສຳຄັນທີ່ອາດຈະຖືກລະບຸໄດ້ໃນການ ກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ອອກຄຳເຫັນສຳລັບການກວດສອບ.

ການສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີບັນຫາໃດທີ່ເຮັດໃຫ້ພວກຂ້າພະເຈົ້າເຊື່ອວ່າເອກະສານລາຍງານການເງິນກາງປີ ຂອງ ບໍລິສັດ ແລະ ກຸ່ມບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ບໍ່ໄດ້ຖືກກະກຽມຢ່າງຖືກຕ້ອງສອດຄ່ອງຕາມ ນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນກາງປີ ແລະ ຂໍ້ກຳນົດດ້ານກົດໝາຍທີ່ ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນກາງປີ ແລະ ແບບແຍກກິດຈະການ.

A member firm of Ernst & Young Global Limited

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ບັນຫາທີ່ຄວນເອົາໃຈໃສ່ - ນະໂຍບາຍການບັນຊີ ແລະ ຂໍ້ຈຳກັດໃນການເຜີຍແຜ່ ແລະ ການນຳໃຊ້

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການທີ່ໄດ້ອະທິບາຍນະໂຍບາຍການບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ ແລະ ກຸ່ມບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ, ຜົນການດຳເນີນງານກາງປີແບບສັງລວມ ແລະ ແບບແຍກກິດຈະການ ແລະ ກະແສເງິນສົດກາງປີແບບສັງລວມ ແລະ ແບບແຍກກິດຈະການຂອງກຸ່ມບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ຄວາມບໍ່ແນ່ນອນທີ່ສຳຄັນຕໍ່ກັບຄວາມສືບເນື່ອງໃນການດຳເນີນງານທຸລະກິດ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ, ເຊິ່ງໄດ້ລະບຸໄວ້ນະມື້ວັນທີ 30 ມິຖຸນາ 2025, ໜີ້ສິນໝຸນວຽນຂອງ [ກຸ່ມບໍລິສັດ/ບໍລິສັດ] ມີມູນຄ່າ 8,207,891/8,175,244 ລ້ານກີບ ເກີນຊັບສິນໝຸນວຽນ, ເຊິ່ງບໍ່ລວມຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດັ່ງກ່າວ ມູນຄ່າ [7,808,212/7,809,731 ລ້ານກີບ], ໂດຍ 6,224,535/6,157,676 ລ້ານກີບ. ເງື່ອນໄຂດັ່ງກ່າວຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນອັນສຳຄັນກ່ຽວກັບຄວາມສາມາດຂອງກຸ່ມບໍລິສັດ ແລະ ບໍລິສັດໃນການສືບຕໍ່ດຳເນີນທຸລະກິດບົນຫຼັກການແຫ່ງຄວາມສືບເນື່ອງ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອິນແອນຢັ່ງ ລາວ ຈຳກັດ

ກະຊວງ ການ ເງິນ
ບໍລິສັດ
ເອິນແອນຢັ່ງລາວ
ຈຳກັດ
Ernst & Young Lao
Co.,Ltd
ນະຄອນ ຫຼວງ ວຽງຈັນ

ວັນເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນ ເລກທີ 018/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

A member firm of Ernst & Young Global Limited

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຖານະການເງິນການປີແບບສັງລວມ ແລະ ແບບແຍກກິດຈະການ
ນະວັນທີ 30 ມິຖຸນາ 2025

	ບົດ ອະທິບາຍ	*ແບບສັງລວມ*		*ແບບແຍກກິດຈະການ*	
		30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ການລົງທຶນໃນ ບໍລິສັດໃນເຄືອ	4.1	-	-	378,321	378,321
ການລົງທຶນໃນ ວິສະຫະກິດຂາຮຸ້ນ	4.2	5,563,132	5,389,015	5,563,132	5,389,015
ການລົງທຶນໃນ ບໍລິສັດຮຸ້ນສ່ວນ	4.3	4,077,596	4,199,393	4,077,596	4,199,393
ການລົງທຶນອື່ນໆ	4.4	375,688	375,688	375,688	375,688
ເງິນລ່ວງໜ້າສຳລັບຊັບສິນພາຍໃຕ້ສັນຍາ ສຳປະທານ	5	1,973,407	1,973,407	1,980,432	1,980,432
ຊັບສິນ, ອາຄານ ແລະ ອຸປະກອນ	6	7,431,978	7,701,842	7,372,609	7,648,328
ຊັບສິນບໍ່ມີຕົວຕົນ, ສຸດທິ		412	132	408	127
ເງິນລ່ວງໜ້າໃຫ້ຜູ້ຮັບເໝົາສຳລັບ ໂຄງການກໍ່ສ້າງ	7	341,075	341,075	-	-
ຊັບສິນບໍ່ໝຸນວຽນອື່ນໆ		24,818	31,310	-	2,284
ລວມຊັບສິນບໍ່ໝຸນວຽນ		**19,788,106**	**20,011,862**	**19,748,186**	**19,973,588**
ຊັບສິນໝຸນວຽນ					
ເງິນສົດ ແລະ ທຽບເທົ່າເງິນສົດ	8	528,846	648,548	521,361	638,794
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	9	1,385,535	1,189,748	1,427,994	1,237,252
ເຄື່ອງອາໄຫຼ່ ແລະ ອຸປະກອນ, ສຸດທິ		3,247	3,104	3,247	3,104
ຊັບສິນໝຸນວຽນອື່ນໆ	10	7,873,940	7,696,183	7,874,697	7,694,156
ລວມຊັບສິນໝຸນວຽນ		**9,791,568**	**9,537,583**	**9,827,299**	**9,573,306**
ລວມຊັບສິນທັ້ງໝົດ		**29,579,674**	**29,549,445**	**29,575,485**	**29,546,894**

	ບົດອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		30 ມິຖຸນາ 2025 ລ້ານກີບ	31 ທັນວາ 2024 ລ້ານກີບ	30 ມິຖຸນາ 2025 ລ້ານກີບ	31 ທັນວາ 2024 ລ້ານກີບ
ໜີ້ສິນ ແລະ ສ່ວນຂອງຜູ້ຖືຮຸ້ນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ໄລຍະຍາວ	11	-	32,168	-	32,168
ຮຸ້ນກູ້ບໍ່ໝຸນວຽນ	12	12,166,756	11,994,844	12,166,756	11,994,844
ລວມໜີ້ສິນບໍ່ໝຸນວຽນ		**12,166,756**	**12,027,012**	**12,166,756**	**12,027,012**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	13	4,101,718	4,725,373	4,083,814	4,707,189
ເງິນກູ້ຢືມໄລຍະຍາວທີ່ຈັດເປັນໄລຍະສັ້ນ	11	-	48,253	-	48,253
ເງິນກູ້ຢືມໄລຍະສັ້ນ, ສຸດທິ	11	857,041	828,547	857,041	828,547
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ, ສຸດທິ	12	2,729,408	2,638,597	2,729,408	2,638,597
ລາຍຈ່າຍຄ້າງຈ່າຍ	14	513,247	556,639	500,220	543,225
ໜີ້ສິນໝຸນວຽນອື່ນໆ		6,477	7,493	4,761	5,445
ລວມໜີ້ສິນໝຸນວຽນ		**8,207,891**	**8,804,902**	**8,175,244**	**8,771,256**
ລວມໜີ້ສິນທັງໝົດ		**20,374,647**	**20,831,914**	**20,342,000**	**20,798,268**
ສ່ວນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນທີ່ຖອກແລ້ວ	15	6,717,215	6,717,215	6,717,215	6,717,215
ສ່ວນເພີ່ມມູນຄ່າຮຸ້ນ	15	985,621	985,621	985,621	985,621
ຄ້າງສຳຮອງຕາມລະບຽບການ		779,895	779,623	776,685	776,685
ຄ້າງສຳຮອງຈາກການຕີມູນຄ່າເງິນຕາຕ່າງປະເທດ		478,317	474,482	478,317	474,482
ກຳໄລສະສົມ/(ຂາດທຶນສະສົມ)		255,645	(227,756)	275,647	(205,377)
ສ່ວນຂອງຜູ້ຖືຮຸ້ນ		**9,216,693**	**8,729,185**	**9,233,485**	**8,748,626**
ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ		(11,666)	(11,654)	-	-
ລວມສ່ວນຂອງຜູ້ຖືຮຸ້ນ		**9,205,027**	**8,717,531**	**9,233,485**	**8,748,626**
ລວມໜີ້ສິນ ແລະ ສ່ວນຂອງຜູ້ຖືຮຸ້ນ		**29,579,674**	**29,549,445**	**29,575,485**	**29,546,894**

ທ່ານ ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານການປີແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		30 ມິຖຸນາ 2025 ລ້ານກີບ	30 ມິຖຸນາ 2024 ລ້ານກີບ	30 ມິຖຸນາ 2025 ລ້ານກີບ	30 ມິຖຸນາ 2024 ລ້ານກີບ
ລາຍຮັບຈາກການຂາຍໄຟຟ້າ ແລະ ການບໍລິການ		653,625	443,875	653,625	443,875
ຕົ້ນທຶນການຂາຍ ແລະ ການບໍລິການ	16	(327,511)	(305,307)	(327,511)	(305,307)
ກຳໄລຂັ້ນຕົ້ນ		**326,114**	**138,568**	**326,114**	**138,568**
ລາຍຮັບອື່ນໆ	17	105,404	86,364	64,930	52,139
ລາຍຈ່າຍການດຳເນີນງານ ແລະ ການບໍລິຫານ	18	(174,870)	(112,536)	(136,583)	(75,860)
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ		(19,445)	230,550	(20,835)	268,443
ສ່ວນແບ່ງກຳໄລຈາກການລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ		813,812	299,433	813,812	299,433
ກຳໄລກ່ອນຕົ້ນທຶນທາງການເງິນ		**1,051,015**	**642,379**	**1,047,438**	**682,723**
ຕົ້ນທຶນທາງການເງິນ	19	(516,035)	(653,918)	(516,035)	(653,906)
ກຳໄລ/(ຂາດທຶນ)ກ່ອນລາຍຈ່າຍອາກອນກຳໄລ		**534,980**	**(11,539)**	**531,403**	**28,817**
ລາຍຈ່າຍອາກອນກຳໄລ	20	(928)	(1,489)	-	-
ກຳໄລ/(ຂາດທຶນ)ພາຍໃນໄລຍະ		**534,052**	**(13,028)**	**531,403**	**28,817**
ກຳໄລ/(ຂາດທຶນ) ທີ່ສາມາດຈັດສັນໃຫ້:					
ສ່ວນທີ່ບໍລິສັດແມ່ເປັນເຈົ້າຂອງ		534,064	(10,294)	531,403	28,817
ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ		(12)	(2,734)	-	-
		534,052	**(13,028)**	**531,403**	**28,817**
ກຳໄລຕໍ່ຮຸ້ນ					
ກຳໄລ/(ຂາດທຶນ)ພື້ນຖານຕໍ່ຮຸ້ນ (ກີບ)	21	318	(6.13)	316	17.16

ທ່ານ ສຸກສະຫວາດ ໂສລຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

	ແບບສັງລວມ							
	ສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດ							
	ຮຸ້ນທີ່ຈົດທະບຽນ ແລະ ຖອກແລ້ວ ລ້ານກີບ	*ສ່ວນເພີ່ມມູນຄ່າ ຮຸ້ນ ລ້ານກີບ*	*ຄັງສຳຮອງຕາມ ລະບຽບການ ລ້ານກີບ*	*ຄັງສຳຮອງຈາກ ການຕີມູນຄ່າ ເງິນຕາຕ່າງປະເທດ ລ້ານກີບ*	*ກຳໄລສະສົມ (ຂາດທຶນສະສົມ) ລ້ານກີບ*	*ລວມ ລ້ານກີບ*	*ສ່ວນໄດ້ເສຍທີ່ບໍ່ ມີອຳນາດ ຄວບຄຸມ ລ້ານກີບ*	*ລວມສ່ວນຂອງ ຜູ້ຖືຮຸ້ນ ລ້ານກີບ*
ນະວັນທີ 1 ມັງກອນ 2024	**6,717,215**	**985,621**	**778,598**	**468,988**	**1,483,786**	**10,434,208**	**(2,004)**	**10,432,204**
ຂາດທຶນສຸດທິໃນໄລຍະ	-	-	-	-	(10,294)	**(10,294)**	(2,734)	**(13,028)**
ການດັດແກ້ຈາກການຕີມູນຄ່າຄືນໃໝ່	-	-	-	12,879	-	**12,879**	-	**12,879**
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	627	-	(627)	**-**	-	**-**
ນະວັນທີ 30 ມິຖຸນາ 2024	**6,717,215**	**985,621**	**779,225**	**481,867**	**1,472,865**	**10,436,793**	**(4,738)**	**10,432,055**
ນະວັນທີ 1 ມັງກອນ 2025	**6,717,215**	**985,621**	**779,623**	**474,482**	**(227,756)**	**8,729,185**	**(11,654)**	**8,717,531**
ກຳໄລສຸດທິໃນໄລຍະ	-	-	-	-	534,052	**534,052**	(12)	**534,040**
ການຈ່າຍເງິນປັນຜົນ (*)	-	-	-	-	(50,379)	**(50,379)**	-	**(50,379)**
ການດັດແກ້ຈາກການຕີມູນຄ່າຄືນໃໝ່	-	-	-	3,835	-	**3,835**	-	**3,835**
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	272	-	(272)	**-**	-	**-**
ນະວັນທີ 30 ມິຖຸນາ 2025	**6,717,215**	**985,621**	**779,895**	**478,317**	**255,645**	**9,216,693**	**(11,666)**	**9,205,027**

(*) ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ທີ່ຈັດຂຶ້ນໃນວັນທີ 25 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນການປີ 2025 ຈຳນວນ 30 ກີບຕໍ່ຮຸ້ນ, ລວມທັງໝົດເປັນຈຳນວນ 50,379 ລ້ານກີບ, ເຊິ່ງເງິນປັນຜົນໄດ້ຖືກຈ່າຍໃນວັນທີ 27 ພຶດສະພາ 2025.

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປິແບບສັງລວມ ແລະ ແບບແຍກກິດຈະການ (ຕໍ່)
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

	ແບບແຍກກິດຈະການ					
	ຮຸ້ນທີ່ຈົດທະບຽນ ແລະ ຖອກແລ້ວ ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ	ຄັງສຳຮອງຕາມ ລະບຽບການ ລ້ານກີບ	ຄັງສຳຮອງຈາກການຕີ ມູນຄ່າເງິນຕາ ຕ່າງປະເທດ ລ້ານກີບ	ກຳໄລສະສົມ/ (ຂາດທຶນສະສົມ) ລ້ານກີບ	ລວມ ລ້ານກີບ
ນະວັນທີ 1 ມັງກອນ 2024	**6,717,215**	**985,621**	**776,685**	**468,988**	**1,496,635**	**10,445,144**
ກຳໄລສຸດທິພາຍໃນໄລຍະ	-	-	-	-	28,817	**28,817**
ການດັດແກ້ຈາກການຕີມູນຄ່າຄືນໃໝ່	-	-	-	12,879	-	**12,879**
ນະວັນທີ 30 ມິຖຸນາ 2024	**6,717,215**	**985,621**	**776,685**	**481,867**	**1,525,452**	**10,486,840**
ນະວັນທີ 1 ມັງກອນ 2025	**6,717,215**	**985,621**	**776,685**	**474,482**	**(205,377)**	**8,748,626**
ກຳໄລສຸດທິພາຍໃນໄລຍະ	-	-	-	-	531,403	**531,403**
ການຈ່າຍເງິນປັນຜົນ (*)	-	-	-	-	(50,379)	**(50,379)**
ການດັດແກ້ຈາກການຕີມູນຄ່າຄືນໃໝ່	-	-	-	3,835	-	**3,835**
ຍອດເຫຼືອນະວັນທີ 30 ມິຖຸນາ 2025	**6,717,215**	**985,621**	**776,685**	**478,317**	**275,647**	**9,233,485**

(*) ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ທີ່ຈັດຂຶ້ນໃນວັນທີ 25 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນການປີ 2025 ຈຳນວນ 30 ກີບຕໍ່ຮຸ້ນ, ລວມທັງໝົດເປັນຈຳນວນ 50,379 ລ້ານກີບ, ເຊິ່ງເງິນປັນຜົນໄດ້ຖືກຈ່າຍໃນວັນທີ 27 ພຶດສະພາ 2025.

ທ່ານ ສຸກສະຫວາດ ໄຂສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ໃບລາຍງານກະແສເງິນສົດກາງປີແບບສັງລວມ ແລະ ແຍກກິດຈະການ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

	ບົດ ອະທິບາຍ	*ແບບສັງລວມ*		*ແບບແຍກກິດຈະການ*	
		30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ກິດຈະກຳການດຳເນີນງານ					
ກຳໄລ/(ຂາດທຶນ) ຫຼັງອາກອນ		**534,980**	**(13,028)**	**531,403**	**28,817**
ດັດແກ້ສຳລັບ:					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		266,984	261,878	266,115	261,517
ລາຍຮັບດອກເບ້ຍ	17	(2,700)	(4,838)	(3,285)	(4,838)
ຕົ້ນທຶນທາງການເງິນ	19	516,035	653,918	516,035	653,906
ກຳໄລໃນຮຸ້ນຈາກການລົງທຶນ		(813,812)	(299,433)	(813,812)	(299,433)
ກຳໄລຈາກກິດຈະກຳການດຳເນີນງານ ກ່ອນການປ່ຽນແປງທຶນໝຸນວຽນ		**501,487**	**598,497**	**496,456**	**639,969**
ດັດແກ້ສຳລັບການປ່ຽນແປງເງິນລົງທຶນ ໝຸນວຽນ:					
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(252,324)	(156,061)	(246,694)	(159,999)
ຊັບສິນອື່ນໆ		142,274	(598,900)	135,282	(779,692)
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		8,987	(22,820)	9,267	(220,694)
ໜີ້ສິນອື່ນໆ		65,875	507,847	67,533	508,105
ເງິນສົດທີ່ໄດ້ຈາກ/(ໃຊ້ໃນ) ໃນກິດຈະກຳ ການດຳເນີນງານ		**466,299**	**328,563**	**461,844**	**(12,311)**
ຈ່າຍດອກເບ້ຍ		(488,649)	(603,092)	(488,649)	(603,092)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳ ການດຳເນີນງານ		**(22,350)**	**(274,529)**	**(26,805)**	**(615,403)**

ໃບລາຍງານກະແສເງິນສົດກາງປີແບບສັງລວມ ແລະ ແຍກກິດຈະການ (ຕໍ່)
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

	ຍົກ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		30 ມິຖຸນາ 2025 ລ້ານກີບ	30 ມິຖຸນາ 2024 ລ້ານກີບ	30 ມິຖຸນາ 2025 ລ້ານກີບ	30 ມິຖຸນາ 2024 ລ້ານກີບ
ກິດຈະກຳຈາກການລົງທຶນ					
ຊື້ຊັບສິນ, ອາຄານ ແລະ ອຸປະກອນ		(20,917)	(20,895)	(14,192)	(12,793)
ເງິນລ່ວງໜ້າທີ່ໄດ້ຮັບຈາກຖອນການລົງທຶນ		-	1,106,900	-	1,106,900
ການລົງທຶນເພີ່ມໃນວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ		-	(1,000)	-	(1,000)
ເງິນສົດຮັບຈາກການຫຼຸດເງິນລົງທຶນໃນບໍລິສັດໃນເຄືອ		-	-	-	342,816
ລາຍຈ່າຍສຳລັບການລົງທຶນໃນບໍລິສັດໃນເຄືອ		-	-	-	(14,221)
ຮັບເງິນປັນຜົນຈາກການລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ		616,424	52,275	616,424	52,275
ກະແສເງິນສົດສຸດທິຈາກ (ໃຊ້ໃນ)/ຈາກ ກິດຈະກຳການລົງທຶນ		**595,507**	**1,137,280**	**602,232**	**1,473,977**
ກິດຈະກຳທາງການເງິນ					
ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ		(50,379)	-	(50,379)	-
ເງິນກູ້ຍືມທີ່ເບີກຖອນ		232,500	-	232,500	-
ຊຳລະຄືນເງິນກູ້ຍືມ ແລະ ຮຸ້ນກູ້ (ລວມເຖິງການຊຳລະຄືນເງິນລ່ວງໜ້າຈາກກະຊວງການເງິນ)		(874,980)	(545,944)	(874,980)	(545,944)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**(692,859)**	**(545,944)**	**(692,859)**	**(545,944)**
ສ່ວນປ່ຽນແປງສຸດທິເງິນສົດ		**(119,702)**	**316,807**	**(117,432)**	**312,630**
ເງິນສົດໃນຕົ້ນງວດ		**648,548**	**1,059,391**	**638,793**	**1,058,430**
ເງິນສົດໃນທ້າຍງວດ		**528,846**	**1,376,198**	**521,361**	**1,371,060**

ທ່ານ ສຸ້ນສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

1. ຂໍ້ມູນບໍລິສັດ

ບໍລິສັດ ຜະລິດ - ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ"), ບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ ("ຟຟລ"), ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ໄດ້ດຳເນີນກິດຈະການ ແລະ ຕັ້ງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 ("ວັນສ້າງຕັ້ງບໍລິສັດ") ເຊິ່ງໃບ ທະບຽນວິສາຫະກິດສະບັບປັບປຸງລ່າສຸດເລກທີ 1180/ຈວທ ລົງວັນທີ 8 ມິຖຸນາ 2022 ອອກໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.

ບໍລິສັດໄດ້ຈົດທະບຽນໂດຍເລີ່ມຈາກ ລັດວິສາຫະກິດໄຟຟ້າລາວ ເຊິ່ງຕິດພັນກັບການປັບປຸງໂຄງສ້າງ ຂອງທຸລະກິດຜະລິງງານ ຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະສະເພາະດ້ານໃດດ້ານ ໜຶ່ງໃຫ້ແກ່ບໍລິສັດໂດຍອີງຕາມສຳນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສຳ ນັກງານນາຍົກລັດຖະມົນຕີ, ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນໂຄງການໂຮງງານໄຟຟ້າອິດສະຫຼະ ("IPP") ໃຫ້ກັບ ບໍລິສັດ.

ໃນວັນທີ 15 ທັນວາ 2010, ວັນສ້າງຕັ້ງບໍລິສັດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງເຂື່ອນ ໄຟຟ້າ 7 ແຫ່ງ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະນຳ ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010 ໃຫ້ບໍລິສັດ ເປັນຈຳນວນເງິນ 2,605,792 ລ້ານກີບ. ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າຂອງຕົນໂດຍ ສ່ວນໃຫຍ່ແມ່ນອີງຕາມການໂອນຍ້າຍຊັບສິນ ດັ່ງກ່າວ ເພື່ອສະໜອງໄຟຟ້າທີ່ຜະລິດໄດ້ຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້ - ຂາຍ ພະລັງງານ ("PPA").

ນອກຈາກນັ້ນ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮຸ້ນສ່ວນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ສະຖານທີ ແລະ ໂຄງສ້າງບໍລິສັດ

ທີ່ຕັ້ງສຳນັກງານຂອງບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ. ນະວັນທີ 30 ມິຖຸນາ 2025, ບໍລິສັດມີ (2) ບໍລິສັດ ໃນເຄືອ, (8) ວິສະຫະກິດຂາຮຸ້ນ, (9) ບໍລິສັດຮຸ້ນສ່ວນ, ເຊິ່ງບໍລິສັດທັງໝົດແມ່ນດຳເນີນທຸລະກິດຢູ່ ສປປ ລາວ.

ພະນັກງານ

ຈຳນວນພະນັກງານທັງໝົດຂອງກຸ່ມບໍລິສັດ ນະວັນທີ 30 ມິຖຸນາ 2025 ແມ່ນ 1,032 ຄົນ (ນະວັນທີ 31 ທັນວາ 2024 ແມ່ນ: 1,021 ຄົນ).

ບໍລິສັດໃນເຄືອ

ນະວັນທີ 30 ມິຖຸນາ 2025, ບໍລິສັດມີ (2) ບໍລິສັດໃນເຄືອ ເຊິ່ງໄດ້ສະຫຼຸບຂໍ້ມູນທາງການເງິນດັ່ງລຸ່ມນີ້:

ຊື່	*ເລກທີໃບທະບຽນ ວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນໂດຍ ຜ-ຟຟລ*
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	647/ຈວທ	ຜະລິດໄຟຟ້າ	80
ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ (EDL GEN O&M)	1216/ຈວທ	ບໍລິການ ການບຳລຸງຮັກສາ	100

1. ຂໍ້ມູນບໍລິສັດ (ຕໍ່)

ວິສາຫະກິດຂາຮຸ້ນ

ນະວັນທີ 30 ມິຖຸນາ 2025, ບໍລິສັດມີ (8) ວິສາຫະກິດຂາຮຸ້ນເຊິ່ງມີດັ່ງລຸ່ມນີ້:

ຊື່	*ຊື່*	*ເລກທີໃບທະບຽນວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນ*
ບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ	ນ້ຳງື່ມ 2	ເລກທີ 0861/ຈວທ, ລົງວັນທີ 22 ມິຖຸນາ 2020 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	25
ບໍລິສັດ ໄຟຟ້ານ້ຳລີກ 1-2 ຈຳກັດ	ນ້ຳລີກ 1-2	ເລກທີ 0527/ຈວທ, ລົງວັນທີ 26 ເມສາ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	10
ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ	ນ້ຳງື່ມ 5	ເລກທີ 0569/ຈວທ, ລົງວັນທີ 18 ເມສາ 2019 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	15
ບໍລິສັດ ໄຟຟ້ານ້ຳແບ ຈຳກັດ	ນ້ຳແບ	ເລກທີ 087/ຈວທ, ລົງວັນທີ 17 ຕຸລາ 2012 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	10
ບໍລິສັດ ໄຟຟ້ານ້ຳລອງ ຈຳກັດ	ນ້ຳລອງ	ເລກທີ 087-12/ຈວທ, ລົງວັນທີ 17 ຕຸລາ 2012 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	20
ບໍລິສັດ ໄຟຟ້າໄຊຍະບຸລີ ຈຳກັດ	ໄຊຍະບຸລີ	ເລກທີ 1608/ຈວທ, ລົງວັນທີ 5 ຕຸລາ 2021 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	20
ບໍລິສັດ ໄຟຟ້ານ້ຳມັງ 1 ຈຳກັດ	ນ້ຳມັງ 1	ເລກທີ 0566/ຈວທ, ລົງວັນທີ 5 ເມສາ 2021 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	10
ບໍລິສັດ ໄຟຟ້ານ້ຳທາ 1 ຈຳກັດ	ນ້ຳທາ 1	ເລກທີ 0447/ຈວທ, ລົງວັນທີ 23 ທັນວາ 2021 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	*ຜະລິດໄຟຟ້າ*	20

1. ຂໍ້ມູນບໍລິສັດ (ຕໍ່)

ບໍລິສັດຮຸ່ນສ່ອນ

ນະວັນທີ 30 ມິຖຸນາ 2025, ບໍລິສັດມີ (9) ບໍລິສັດຮຸ່ນສ່ອນເຊິ່ງມີດັ່ງລຸ່ມນີ້:

ຊື່	*ຊື່*	*ເລກທີໃບທະບຽນວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນ*
ບໍລິສັດ ເຫີນ-ຫີນບຸນ ພາວເວີ ຈຳກັດ	ເຫີນ-ຫີນບຸນ	ເລກທີ 0596/ຈວທ, ລົງວັນທີ 05 ກໍລະກົດ 2017 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	60
ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ	ຫ້ວຍເຫາະ ຫ້ວຍລຳພັນ	ເລກທີ 0461/ຈວທ, ລົງວັນທີ 20 ສິງຫາ 2013 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	20
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ	ຕອນລຸ່ມ	ເລກທີ 024/ຈວທ, ລົງວັນທີ 15 ມີນາ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	60
ບໍລິສັດ ໄຟຟ້ານ້ຳດີກ 1 ຈຳກັດ	ນ້ຳດີກ 1	ເລກທີ 1800/ຈວທ, ລົງວັນທີ 21 ມິຖຸນາ 2023 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	70
ບໍລິສັດ ນ້ຳພູນ ພາວເວີ ຈຳກັດ	ນ້ຳພູນ	ເລກທີ 027-16/ຜກທ, ລົງວັນທີ 30 ພຶດສະພາ 2016 ໂດຍກະຊວງແຜນການ ແລະ ການລົງທຶນ	ຜະລິດໄຟຟ້າ	51
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ (ບໍລິສັດຮຸ່ນສ່ອນກັບ ບໍລິສັດ O&M)	ອີແອນອີ ອີດີແອວເຈັນ	ເລກທີ 1059/ຈວທ, ລົງວັນທີ 15 ພະຈິກ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການບຳລຸງຮັກສາ	60
ບໍລິສັດ ອີດີແອວເຈັນ ເຣດ໌ ຈຳກັດ	ເຣດ໌	ເລກທີ 0771/ຈວທ, ລົງວັນທີ 21 ພຶດສະພາ 2019	ບໍລິການ	80
ບໍລິສັດ ໄຟຟ້າ ນ້ຳເຫີນ 1 ຈຳກັດ	ນ້ຳເຫີນ 1	ເລກທີ 0786/ຈວທ, ລົງວັນທີ 22 ມີນາ 2023 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	15
ບໍລິສັດ ນ້ຳລີກ 1 ຈຳກັດ	ນ້ຳລີກ 1	ເລກທີ 027-16/ຜກທ, ລົງວັນທີ 25 ມີນາ 2016 ໂດຍກະຊວງແຜນການ ແລະ ການລົງທຶນ	ຜະລິດໄຟຟ້າ	10

2. ພື້ນຖານໃນການກະກຽມ

2.1 *ພື້ນຖານໃນການກະກຽມ*

ອີງຕາມກົດໝາຍບັນຊີ ເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດທີ່ມີຜົນປະໂຫຍດສາທາລະນະ, ລວມທັງ ບໍລິສັດຈົດທະບຽນ ຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ໃນການ ກະກຽມເອກະສານລາຍງານການເງິນຂອງຕົນ ໂດຍໃຫ້ເລີ່ມປະຕິບັດຕັ້ງແຕ່ປີ 2017. ອີງຕາມໜັງສືແຈ້ງການ ເລກທີ 1137/ກງ ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ເຫັນດີໃຫ້ບໍລິສັດທີ່ຮັບໃຊ້ປະໂຫຍດສາທາລະນະສາມາດເລື່ອນ ການຈັດຕັ້ງປະຕິບັດ ແລະ ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ຈົນເຖິງວັນທີ 1 ມັງກອນ 2026 ເປັນຕົ້ນໄປ. ປະຈຸບັນຄະນະຜູ້ບໍລິຫານຂອງກຸ່ມບໍລິສັດແມ່ນກຳລັງກະກຽມແຜນການໃນການຈັດຕັ້ງປະຕິບັດມາດຕະຖານ ສາກົນດ້ານການລາຍງານການເງິນ ("IFRS") ຕາມການແຈ້ງການສະບັບດັ່ງກ່າວ.

ສຳລັບ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ກະກຽມ ເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ (ເວົ້າລວມແມ່ນ "ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ") ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ນະໂຍບາຍການບັນຊີ ເຫຼົ່ານີ້ບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການໃບ ລາຍງານຜົນການດຳເນີນງານກາງປີແບບສັງລວມ ແລະ ແບບແຍກກິດຈະການ ແລະ ກະແສເງິນສົດກາງປີຂອງກຸ່ມບໍລິສັດ/ ບໍລິສັດ ຕາມຫຼັກການມາດຕະຖານສາກົນດ້ານການລາຍງານການເງິນ IFRS.

ນະວັນທີ 31 ທັນວາ 2024, ອັດຕາເງິນເຟີ້ສະສົມໃນ ສປປ ລາວ ຕະຫຼອດໄລຍະ 36 ເດືອນຜ່ານມາໄດ້ລື່ນເກີນ 100%, ເຊິ່ງ ຈັດປະເພດຂອງປະເທດເປັນເສດຖະກິດທີ່ມີພາວະເງິນເຟີ້ສູງ, ອີງຕາມລາຍງານຂອງທະນະຄານແຫ່ງ ສປປ ລາວ (https://www.bol. gov.la/en/inflation). ນະວັນທີ 30 ມິຖຸນາ 2025, ອັດຕາເງິນເຟີ້ສະສົມຕະຫຼອດໄລຍະ 36 ເດືອນຜ່ານ ມາໄດ້ຫຼຸດລົງເຖິງ 74%, ຢ່າງໃດກໍຕາມ, ເພື່ອພິຈາລະນາວ່າສະກຸນເງິນຈະຢຸດມີພາວະເງິນເຟີ້ສູງໄດ້ ຈຳເປັນຕ້ອງເບິ່ງແນວ ໂນ້ມ ແລະ ການທົບທວນຄືນທີ່ຕາມມາຈົນເຖິງທ້າຍປີ 2025. ດັ່ງນັ້ນ, ບໍລິສັດຈຶ່ງບໍ່ໄດ້ນຳນະໂຍບາຍບັນຊີໃດເພື່ອແກ້ໄຂຜົນ ກະທົບຂອງພາວະເງິນເຟີ້ສູງ ເນື່ອງຈາກບໍ່ມີແນວທາງສະເພາະຈາກມາດຕະຖານການລາຍງານການເງິນຂອງລາວ ("FRS") ແລະ ກະຊວງການເງິນ ("MOF") ຕໍ່ເລື່ອງນີ້.

ສຳລັບໄລຍະສິ້ນສຸດ 30 ມິຖຸນາ 2025, ບໍລິສັດໄດ້ກະກຽມເອກະສານລາຍງານການເງິນກາງປີຕາມນະໂຍບາຍບັນຊີທີ່ລະບຸ ໃນບົດອະທິບາຍເລກທີ 3 ສຳລັບການລາຍງານການເງິນກາງປີເພື່ອຈຸດປະສົງສະເພາະ ເຊິ່ງເປັນໄປຕາມຂໍ້ກຳນົດການລາຍງານ ຂອງສ່ວນເຈົ້າຂອງ, ແທນມາດຕະຖານການລາຍງານການເງິນຂອງລາວ FRS, ແລະ ໄດ້ເລືອກທີ່ຈະບໍ່ໃຊ້ IAS 29. ເອກະສານລາຍງານການເງິນກາງປີເຫຼົ່ານີ້ (ຫຼືເອີ້ນອີກຢ່າງວ່າ " ເອກະສານລາຍງານການເງິນກາງປີ") ສະແດງເປັນເງິນກີບລາວ ("LAK") ເນື່ອງຈາກເປັນສະກຸນເງິນທີ່ໃຊ້ກຳນົດ ແລະ ຊຳລະທຸລະກຳສ່ວນໃຫຍ່ເປັນຫຼັກຂອງບໍລິສັດ. ມູນຄ່າທັງໝົດຈະ ສະແດງເປັນເງິນກີບຍົກເວັ້ນໃນກໍລະນີທີ່ລະບຸໄວ້ເປັນຢ່າງອື່ນ.

ເອກະສານລາຍງານການເງິນກາງປີແບບສັງລວມຂອງບໍລິສັດ ແລະ ບັນດາບໍລິສັດໃນເຄືອ ("ກຸ່ມບໍລິສັດ") ແລະ ເອກະສານ ລາຍງານການເງິນກາງປີແບບແຍກກິດຈະການ ແມ່ນຖືກກະກຽມດ້ວຍຮູບແບບມູນຄ່າເດີມ.

ຄວາມສົນເນື່ອງໃນການດຳເນີນທຸລະກິດ

ນະວັນທີ 30 ມິຖຸນາ 2025, ໜີ້ສິນໝຸນວຽນຂອງ [ກຸ່ມບໍລິສັດ/ບໍລິສັດ] ມີມູນຄ່າ 8,207,891/8,175,244 ລ້ານກີບ ເກີນ ຊັບສິນໝຸນວຽນ [ເຊິ່ງບໍ່ລວມຂາດທຶນສຸດທິຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າ ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີດັ່ງກ່າວ ມູນຄ່າ 7,808,212/7,809,731 ລ້ານກີບ] ໂດຍ [6,224,535/6,157,676 ລ້ານກີບ], ເຊິ່ງໄດ້ ລາຍງານໃນເອກະສານລາຍງານຖານະການເງິນກາງປີ [ແບບສັງລວມ/ແບບແຍກກິດຈະການ].

ເງື່ອນໄຂເຫຼົ່ານີ້ເປັນຕົວຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ສຳຄັນ ທີ່ອາດຈະຮັດໃຫ້ເກີດຂໍ້ສົງໄສກ່ຽວກັບກຸ່ມບໍລິສັດ ຫຼື ບໍລິສັດມີ ຄວາມສາມາດໃນການສືບຕໍ່ດຳເນີນທຸລະກິດຕາມຄວາມສືບເນື່ອງໃນການດຳເນີນທຸລະກິດ. ດ້ວຍເຫດນີ້, ກຸ່ມບໍລິສັດມີ ຄວາມສາມາດໃນການສືບຕໍ່ດຳເນີນທຸລະກິດແມ່ນຂຶ້ນກັບຄວາມສາມາດໃນການຮັກສາທຶນໝຸນວຽນທີ່ພຽງພໍສຳລັບການດຳ ເນີນງານ.

2. ພື້ນຖານໃນການກະກຽມ (ຕໍ່)

2.1 *ພື້ນຖານໃນການກະກຽມ (ຕໍ່)*

ຄະນະຜູ້ບໍລິຫານຂອງກຸ່ມບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະໜັບສະໜຸນການຊຳລະສະສາງ ແລະ ແຜນການດຳເນີນງານສຳລັບ 12 ເດືອນຂ້າງໜ້າ. ການຄາດຄະເນໄດ້ຖືກກະກຽມຕົ້ນຕໍບົນພື້ນຖານຂອງ (i) ກະແສເງິນສົດທີ່ຄາດວ່າຈະມາຈາກກິດຈະກຳການດຳເນີນງານ; (ii) ລາຍຮັບຈາກການລົບລ້າງ, ເງິນຝັນຜົນຈາກການລົງທຶນໃນປັດຈຸບັນ ແລະ ລາຍຮັບຈາກການໂອນຊັບສິນ; ແລະ (iii) ຄວາມສາມາດຂອງຝ່າຍບໍລິຫານທີ່ຈະຮຽກຮ້ອງໃນການຊຳລະຊັກຊ້າຕໍ່ລາຍຈ່າຍທີ່ຈຳເປັນ. ນອກຈາກນັ້ນ, ລັດວິສາຫະກິດ ໄຟຟ້າລາວ ("ຟຟລ") ຜູ້ຖືຮຸ້ນໃຫຍ່ຂອງ ຜ-ຟຟລ, ຍັງໄດ້ໃຫ້ການຢັ້ງຢືນວ່າມີຄວາມເຕັມໃຈ ແລະ ຄວາມສາມາດໃນການສະໜອງເງິນທຶນທີ່ພຽງພໍໃຫ້ແກ່ [ບໍລິສັດ/ກຸ່ມບໍລິສັດ] ເພື່ອສືບຕໍ່ການດຳເນີນງານພາຍໃນ 12 ເດືອນຂ້າງໜ້າ, ຖ້າຈຳເປັນ. ພາຍໃຕ້ພື້ນຖານນີ້, ຄະນະຜູ້ບໍລິຫານໄດ້ພິຈາລະນາເຖິງຄວາມເໝາະສົມສຳລັບການກະກຽມເອກະສານລາຍງານການເງິນກາງປີຂອງ [ບໍລິສັດ/ກຸ່ມບໍລິສັດ] [ແບບສັງລວມ/ແບບແຍກກິດຈະການ] ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

2.2 *ປີການບັນຊີ*

ປີການບັນຊີຂອງກຸ່ມບໍລິສັດແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

2.3 *ສະກຸນເງິນການບັນຊີ*

ກຸ່ມບໍລິສັດນຳໃຊ້ການບັນທຶກບັນຊີເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ໃຊ້ໃນການດຳເນີນທຸລະກຳຂອງກຸ່ມບໍລິສັດ. ເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການຂອງກຸ່ມບໍລິສັດແມ່ນຖືກນຳສະເໜີເປັນຫົວໜ່ວຍລ້ານກີບ ("ລ້ານກີບ").

2.4 *ພື້ນຖານການສັງລວມ*

ບໍລິສັດໃນເຄືອແມ່ນໄດ້ຖືກສັງລວມຂໍ້ມູນທັງໝົດນັບຈາກມື້ທີ່ໄດ້ມາຂອງຂໍ້ມູນ, ເປັນມື້ທີ່ກຸ່ມບໍລິສັດຢູ່ພາຍໃຕ້ການຄວບຄຸມ ແລະ ສືບຕໍ່ສັງລວມຈົນເຖິງມື້ທີ່ສິ້ນສຸດການຄວບຄຸມ.

ເອກະສານລາຍງານການເງິນຂອງບໍລິສັດໃນເຄືອແມ່ນຖືກກະກຽມພາຍໃຕ້ປີການບັນຊີອັນດຽວກັນກັບບໍລິສັດແມ່, ໂດຍການນຳໃຊ້ນະໂຍບາຍການບັນຊີທີ່ສອດຄ່ອງກັນ.

ຍອດເຫຼືອພາຍໃນກຸ່ມທັງໝົດ, ລາຍຮັບ ແລະ ລາຍຈ່າຍ ແລະ ກຳໄລ ຫຼື ຂາດທຶນທີ່ຍັງບໍ່ທັນເກີດຂຶ້ນຈິງ ທີ່ມີຜົນຈາກລາຍການທີ່ກ່ຽວຂ້ອງກັນພາຍໃນກຸ່ມແມ່ນຈະຖືກຕັດອອກທັງໝົດ.

ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມແມ່ນຈະນຳສະເໜີຜົນກຳໄລ ຫຼື ຂາດທຶນ ແລະ ຊັບສິນສຸດທິທີ່ບໍ່ໄດ້ຖືໂດຍກຸ່ມບໍລິສັດ ແລະ ຈະຖືກນຳສະເໜີແຍກຈາກໃບລາຍງານຜົນໄດ້ຮັບແບບສັງລວມ ແລະ ທຶນໃນໃບລາຍງານຖານະການເງິນກາງປີແບບສັງລວມ, ແບບແຍກຈາກສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດແມ່.

ຜົນກະທົບຈາກສ່ວນປ່ຽນແປງຄວາມເປັນເຈົ້າຂອງໃນບໍລິສັດໃນເຄືອໂດຍທີ່ບໍ່ໄດ້ສູນເສຍການຄວບຄຸມແມ່ນຈະຖືກບັນທຶກເປັນທຸລະກຳຂອງກິດຈະການ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ

3.1 *ທຸລະກຳເງິນຕາຕ່າງປະເທດ*

ເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການແມ່ນຖືກສະເໜີໂດຍສະກຸນເງິນກີບ ເຊິ່ງເປັນສະກຸນເງິນດຽວກັນກັບສະກຸນເງິນການບັນຊີຂອງບໍລິສັດ.

ອີງຕາມໜັງສື ເລກທີ 306/ກບຊ, ລົງວັນທີ 4 ພຶດສະພາ 2020 ອອກໂດຍກົມບັນຊີ ກະຊວງການເງິນ, ກຸ່ມບໍລິສັດໄດ້ຮັບການອະນຸມັດນະໂຍບາຍດ້ານການບັນຊີທີ່ກ່ຽວກັບທຸລະກຳທີ່ເປັນເງິນຕາຕ່າງປະເທດຕາມຂ້າງລຸ່ມນີ້.

ທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນຈະຖືກແປງຄ່າເປັນສະກຸນເງິນກີບດ້ວຍອັດຕາແລກປ່ຽນຂອງວັນທີ່ທຸລະກຳເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນສະແດງມູນຄ່າເປັນເງິນຕາຕ່າງປະເທດແມ່ນຖືກແປງຄ່າເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນ ນະວັນທີລາຍງານ.

ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນ

- ຊັບສິນ ແລະ ໜີ້ສິນຢູ່ໃນໃບລາຍງານຖານະການເງິນກາງປີແມ່ນສະເໜີ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍມື້ ຂອງໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ;
- ສ່ວນຕ່າງທັງໝົດຈາກການອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ ແມ່ນຮັບຮູ້ໃນຈຳນວນສຸດທິ ຂອງບັນດາຊັບສິນໝຸນວຽນອື່ນ ຫຼື ໜີ້ສິນໝຸນວຽນອື່ນໃນໃບລາຍງາຍຖານະການເງິນຈົນກວ່າຈະເກີດຂຶ້ນຈິງໃນປີຕໍ່ໄປ;
- ກຳໄລ/ຂາດທຶນທີ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການເມື່ອມີການຊຳລະ.

ສຳລັບວິສາຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ບໍລິສັດໃນເຄືອ, ຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດດັ່ງກ່າວທີ່ມີການນຳສະເໜີສະກຸນເງິນທີ່ແຕກຕ່າງຈາກສະກຸນເງິນກີບ ແມ່ນຈະຖືກຕີມູນຄ່າເປັນສະກຸນເງິນກີບ ວິທີສ່ວນໄດ້ສ່ວນເສຍທາງບັນຊີດັ່ງນີ້:

- ຊັບສິນ ແລະ ໜີ້ສິນຢູ່ໃນໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການແມ່ນສະແດງ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍງວດຂອງໃບລາຍງານຖານະການເງິນກາງປີ;
- ລາຍຮັບ ແລະ ລາຍຈ່າຍໃນໃບລາຍງານຜົນການດຳເນີນງານກາງປີແບບສັງລວມ ແລະ ແບບແຍກກິດຈະການ ຖືກແປງຄ່າໂດຍໃຊ້ອັດຕາແລກປ່ຽນສະເລ່ຍໃນປີ;
- ຜົນຕ່າງຕ່າງທັງໝົດຈາກການແປງຄ່າທີ່ຍັງບໍ່ເກີດຂຶ້ນຈິງແມ່ນຮັບຮູ້ໃນສ່ວນປ່ຽນແປງຂອງທຶນແບບສັງລວມ ແລະ ແບບແຍກກິດຈະການ.

3.2 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດປະກອບດ້ວຍເງິນສົດໃນມື, ແຊ້ກ, ເງິນຝາກຢູ່ທະນາຄານ ແລະ ເງິນຝາກໃນທະນາຄານອື່ນ ແລະ ເງິນຝາກໄລຍະສັ້ນອື່ນໆ ທີ່ມີສະພາບຄ່ອງສູງໂດຍມີໄລຍະເວລາໜ້ອຍກວ່າ 3 ເດືອນນັບຈາກວັນທີ່ຮັບຮູ້.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.3 *ເຄື່ອງໃນສາງ*

ເຄື່ອງໃນສາງແມ່ນລວມເອົາ ອາໄຫຼ່ ແລະ ເຄື່ອງໃນສາງ, ໂດຍການນັບເອົາມູນຄ່າຕ່ຳສຸດຂອງຕົ້ນທຶນສິນຄ້າ ແລະ ມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບຄືນ. ການຄິດໄລ່ຕົ້ນທຶນສິນຄ້າແມ່ນໄດ້ກຳນົດໂດຍວິທີການຕີມູນຄ່າສະເລ່ຍແບບຖ່ວງໜັກ. ຕົ້ນທຶນຊື້ປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງຂອງການໄດ້ມາຂອງເຄື່ອງໃນສາງນັ້ນເຊັ່ນ: ຄ່າຂົນສົ່ງ, ຫັກສ່ວນຫຼຸດທີ່ໄດ້ຮັບ, ເງິນອຸດໜູນ ແລະ ສ່ວນຫຼຸດອື່ນໆ. ມູນຄ່າສິນຄ້າສຸດທິແມ່ນລາຄາໂດຍເຄື່ອງໃນສາງສາມາດຮັບຮູ້ໄດ້ຕາມເຫດການໂດຍທົ່ວໄປຂອງທຸລະກິດ, ຫຼັງການອະນຸຍາດໃຫ້ມີຕົ້ນທຶນການຜະລິດ.

ເງິນແຮສຳລັບຄວາມລ້າສະໄໝຂອງເຄື່ອງໃນສາງ

ເງິນແຮຂອງເຄື່ອງໃນສາງແມ່ນສ້າງເພື່ອການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ ແລະ ອື່ນໆ) ຂອງເຄື່ອງໃນສາງຂອງກຸ່ມບໍລິສັດ, ອີງຕາມຫຼັກຖານທີ່ສົມເຫດສົມຜົນຂອງການເສື່ອມມູນຄ່າທີ່ເຫັນໄດ້ນະມື້ລາຍງານ.

ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນຖືກບັນທຶກໃນໃບລາຍງາຍຜົນໄດ້ຮັບການງິນແບບສັງລວມ ແລະ ແບບແຍກກິດຈະການ.

3.4 *ໜີ້ຕ້ອງຮັບ*

ໜີ້ຕ້ອງຮັບແມ່ນໄດ້ສະແດງໃນເອກະສານລາຍງານການເງິນການປີ ຕາມມູນຄ່າໜີ້ຄ້າງຮັບຈາກລູກຄ້າ ແລະ ໜີ້ຄ້າງຮັບອື່ນໆ ຫຼັງການຫັກເງິນແຮສຳລັບໜີ້ເສຍ.

ເງິນແຮສຳລັບໜີ້ເສຍ

ເງິນແຮສຳລັບໜີ້ເສຍແມ່ນຖືກກຳນົດໂດຍການຕັດສິນໃຈຂອງຜູ້ບໍລິຫານໂດຍອີງຕາມປະຫວັດການສູນເສຍທີ່ຜ່ານມາ. ສຳລັບຍອດເຫຼືອເງິນທີ່ຄ້າງຊຳລະເກີນ 3 ເດືອນຂຶ້ນໄປ (ຍົກເວັ້ນອີງກອນຂອງລັດຖະບານ), ການບໍລິການທີ່ຕິດພັນກັບລູກຄ້າຈະຖືກຢຸດເຊົາ ແລະ ໜີ້ຕ້ອງຮັບຈະລຶບລ້າງອອກເມື່ອມີການຕັດສິນໃຈຢ່າງເປັນທາງການຈາກຄະນະຜູ້ບໍລິຫານ.

3.5 *ຊັບສິນ ແລະ ອຸປະກອນ*

ການຮັບຮູ້

ຕົ້ນທຶນຈະລວມເຖິງຄ່າໃຊ້ຈ່າຍໃນການໄດ້ມາຂອງຊັບສິນນັ້ນ. ຄ່າໃຊ້ຈ່າຍຂອງຊັບສິນທີ່ສ້າງຂຶ້ນເອງປະກອບມີຄ່າໃຊ້ຈ່າຍຂອງວັດສະດຸ ແລະ ຄ່າແຮງງານທາງກົງ, ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ ເພື່ອໃຫ້ຊັບສິນຢູ່ໃນສະພາບພ້ອມນຳໃຊ້.

ອີງຕາມສັນຍາສຳປະທານ, ກຸ່ມບໍລິສັດຈະຕ້ອງໂອນຊັບສິນທັງໝົດຂອງການດຳເນີນງານໂຄງການ ຕາມທີ່ກຳນົດໄວ້ໃນສັນຍາສຳປະທານຂອງກຸ່ມບໍລິສັດໃຫ້ກັບລັດຖະບານລາວ ເມື່ອສິ້ນສຸດໄລຍະເວລາສຳປະທານ. ສິດໃນການນຳໃຊ້ຊັບສິນບັດຄົງທີ່ຈະຖືກໂອນໃຫ້ລັດຖະບານ ແຫ່ງ ສປປ ລາວ ເມື່ອສັນຍາທີ່ກ່ຽວຂ້ອງທັງໝົດໄດ້ຮັບການຕີລາຄາເຫັນດີຮ່ວມກັນ ແລະ ສະເໜີຕໍ່ພະແນກຊັບພະຍາກອນພະລັງງານ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.5 ຊັບສິນ ແລະ ອຸປະກອນ (ຕໍ່)

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈະຖືກລວມໄວ້ໃນມູນຄ່າຕາມບັນຊີຕາມຄວາມເໝາະສົມ ເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດທາງເສດຖະກິດໃນອານາຄົດ ທີ່ກ່ຽວຂ້ອງກັບຊັບສິນ ແລະ ສາມາດວັດມູນຄ່າຢ່າງໜ້າເຊື່ອຖືໄດ້. ມູນຄ່າຂອງຊັບສິນທີ່ຖືກປ່ຽນຈະຖືກສະສາງອອກ. ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນໄດ້ບັນທຶກໄວ້ໃນໃບລາຍງານຜົນໄດ້ຮັບກາງປີໃນໄລຍະຮອບເວລາບັນຊີທີ່ເກີດຂຶ້ນ.

ຊັບສິນ ແລະ ອຸປະກອນແມ່ນສະແດງຢູ່ໃນຕົ້ນທຶນຫັກລົບກັບຄ່າຫຼ້ຍຫ້ຽນສະສົມ. ຄ່າຫຼ້ຍຫ້ຽນແມ່ນຖືກຄິດໄລ່ຕາມຫຼັກການເສັ້ນຊື່ຕໍ່ອາຍຸການນຳໃຊ້ທີ່ຄາດໄວ້ ແຕ່ບໍ່ເກີນໄລຍະເວລາສຳປະທານຕາມສັນຍາສຳປະທານທີ່ກ່ຽວຂ້ອງ ເຊິ່ງແມ່ນ 30 ປີ. ອັດຕາປະຈຳປີທີ່ນຳໃຊ້ສຳລັບຈຸດປະສົງຕາມປະເພດຂອງຊັບສິນໄດ້ກຳນົດໄວ້ຂ້າງລຸ່ມນີ້:

	ປີ
ອາຄານ (ອາຄານຫ້ອງການ, ການປັບປຸງການກໍ່ສ້າງລວມທັງຫ້ອງການສາຂາ)	4 - 30
ເຂື່ອນໄຟຟ້າ	19 - 30
ເຄື່ອງຈັກ ແລະ ອຸປະກອນ (ລວມທັງເຄື່ອງຈັກໄຟຟ້າທີ່ໃຊ້ຢູ່ໃນເຂື່ອນໄຟຟ້າ ແລະ ຕາຂ່າຍສາຍສົ່ງ ແລະ ກະຈາຍໄຟຟ້າ)	2 - 30
ພາຫະນະ	5
ເຄື່ອງໃຊ້ຫ້ອງການ, ອຸປະກອນ ແລະ ການຕິດຕັ້ງ	3 - 10

ກຸ່ມບໍລິສັດຈະບັນທຶກຄ່າຫຼ້ຍຫ້ຽນເປັນຄ່າໃຊ້ຈ່າຍຕາມໄລຍະເວລາ. ເມື່ອຊັບສິນໄລຍະຍາວຖືກເກັບຄືນ, ກຸ່ມບໍລິສັດຈະຕ້ອງໄດ້ສະສາງຊັບສິນ ແລະ ຄ່າຫຼ້ຍຫ້ຽນສະສົມທີ່ກ່ຽວຂ້ອງຈາກບັນຊີ ແລະ ຮັບຮູ້ເປັນກຳໄລ ຫຼື ການຂາດທຶນຈາກການເກັບຄືນຂອງຊັບສິນໃນລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

ມູນຄ່າຕາມບັນຊີຂອງຊັບສິນຈະຖືກສະສາງອອກທັນທີໃຫ້ມີມູນຄ່າເທົ່າກັບມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ ຖ້າມູນຄ່າຕາມບັນຊີຂອງຊັບສິນຫຼາຍກວ່າມູນຄ່າທີ່ຄາດວ່າຈະໄດ້ຮັບ.

ກຳໄລ ຫຼື ຂາດທຶນຈາກການຂາຍແມ່ນຖືກກຳນົດໂດຍການປຽບທຽບລາຍໄດ້ກັບມູນຄ່າຕາມບັນຊີແລະ ຖືກຮັບຮູ້ໃນ '(ຂາດທຶນ)/ກຳໄລ ອື່ນໆ - ສຸດທິ' ໃນໃບລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

3.6 ຊັບສິນຕາມສັນຍາເຊົ່າ

ການກຳນົດການຈັດຫາ ຫຼື ປະກອບມີສັນຍາເຊົ່າແມ່ນອີງຕາມເນື້ອໃນຂອງການຈັດຫາ ນະວັນທີ່ເລີ່ມຕົ້ນສັນຍາ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າປະຕິບັດຕາມການຈັດຫາແມ່ນຂຶ້ນກັບການນຳໃຊ້ຊັບສິນສະເພາະ ແລະ ການຈັດຫາສິດໃນການນຳໃຊ້ຊັບສິນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.6 *ຊັບສິນຕາມສັນຍາເຊົ່າ (ຕໍ່)*

ສັນຍາເຊົ່າແມ່ນຈັດປະເພດເປັນສັນຍາເຊົ່າທາງການເງິນເມື່ອເງື່ອນໄຂຂອງສັນຍາເຊົ່າມີການໂອນຄວາມສ່ຽງທັງໝົດ ແລະ ຜົນຕອບແທນຂອງເຈົ້າຂອງຊັບສິນທີ່ໃຫ້ເຊົ່າ. ສັນຍາເຊົ່າອື່ນໆທັງໝົດແມ່ນຈັດປະເພດເປັນສັນຍາເຊົ່າການດຳເນີນງານ.

ເມື່ອກຸ່ມບໍລິສັດເປັນຜູ້ເຊົ່າ

ຊັບສິນທີ່ຢູ່ພາຍໃຕ້ການໃຫ້ສັນຍາເຊົ່າທາງການເງິນ ແມ່ນຮັບຮູ້ເປັນຊັບສິນໃນໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ ນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຕາມມູນຄ່າຍຸຕິທຳຂອງຊັບສິນສັນຍາເຊົ່າ ຫຼື ຖ້າຕ່ຳກວ່າ, ອີງຕາມມູນຄ່າປັດຈຸບັນສຸດທິຂອງການຊຳລະຄ່າເຊົ່າຕ່ຳສຸດ. ມູນຄ່າຕົ້ນທຶນ ລວມທັງການຊຳລະຕາມສັນຍາເຊົ່າໃນອານາຄົດ ພາຍໃຕ້ສັນຍາເຊົ່າທາງການເງິນແມ່ນຖືກບັນທຶກເປັນໜີ້ສິນ. ມູນຄ່າດອກເບ້ຍທີ່ລວມຢູ່ໃນການຊຳລະສັນຍາເຊົ່າ ແມ່ນຄິດໄລ່ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການຕາມໄລຍະເວລາເຊົ່າ ເພື່ອໃຫ້ໄດ້ອັດຕາດອກເບ້ຍຕາມມູນຄ່າທີ່ຍັງເຫຼືອຂອງໜີ້ສິນຕາມສັນຍາເຊົ່າທາງການເງິນ. ການຮັບຮູ້ຊັບສິນຕາມສັນຍາເຊົ່າທາງການເງິນແມ່ນຄິດໄລ່ຄ່າເສື່ອມມູນຄ່າໂດຍການນຳໃຊ້ວິທີເສັ້ນຊື່ ຕາມການປະເມີນໄລຍະທີ່ສັ້ນກວ່າຂອງອາຍຸການນຳໃຊ້ຂອງຊັບສິນ ແລະ ໄລຍະເວລາຂອງສັນຍາເຊົ່າ , ຖ້າບໍ່ມີຄວາມແນ່ນອນຢ່າງສົມເຫດສົມຜົນ, ກຸ່ມບໍລິສັດຈະຮັບເອົາກຳມະສິດໂດຍມື້ສິ້ນສຸດຂອງໄລຍະເວລາຂອງສັນຍາເຊົ່າ.

ຄ່າເຊົ່າພາຍໃຕ້ສັນຍາເຊົ່າການດຳເນີນງານແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ໂດຍການໃຊ້ວິທີເສັ້ນຊື່ຕາມໄລຍະເວລາສັນຍາເຊົ່າ.

ເມື່ອກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ກຸ່ມບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຈາກຄວາມເປັນເຈົ້າຂອງຊັບສິນໃຫ້ຈັດເປັນສັນຍາເຊົ່າດ້ານການດຳເນີນງານ. ລາຍຮັບຄ່າເຊົ່າແມ່ນບັນທຶກເປັນລາຍຮັບທີ່ອີງຕາມເງື່ອນໄຂສັນຍາຂອງລາຍຮັບຄ່າເຊົ່າ. ຕົ້ນທຶນໂດຍກົງເບື້ອງຕົ້ນເກີດໃນການເຈລະຈາສັນຍາເຊົ່າການດຳເນີນງານໄດ້ຖືກເພີ່ມເປັນມູນຄ່າຕາມບັນຊີຂອງຊັບສິນສັນຍາເຊົ່າ ແລະ ໄດ້ຖືກຮັບຮູ້ຕາມເງື່ອນຕາມໄລຍະສັນຍາເຊົ່າເຊິ່ງຄ້າຍຄືກັບລາຍຮັບຄ່າເຊົ່າ. ສຳລັບຄ່າເຊົ່າບັ່ງເອີນແມ່ນໄດ້ຮັບຮູ້ເປັນລາຍຮັບຕາມໄລຍະເວລາທີ່ພວກເຂົາມີລາຍຮັບ.

3.7 *ເງິນກູ້ຢືມ*

ເງິນກູ້ຢືມຖືກຮັບຮູ້ຕາມມູນຄ່າທີ່ໄດ້ຮັບຕົວຈິງ, ສຸດທິກັບຕົ້ນທຶນທີ່ເກີດຂຶ້ນ, ຖ້າມີ.

ເງິນກູ້ຢືມແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ຍົກເວັ້ນກຸ່ມບໍລິສັດບໍ່ມີເງື່ອນໄຂໃນການເລື່ອນການຊຳລະໜີ້ໃນໄລຍະເວລາຢ່າງໜ້ອຍ 12 ເດືອນຫຼັງວັນທີໃບລາຍງານຖານະທາງການເງິນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.8 ລາຍຈ່າຍຈ່າຍລ່ວງໜ້າ

ລາຍຈ່າຍຈ່າຍລ່ວງໜ້າຈະລາຍງານເປັນລາຍຈ່າຍລ່ວງໜ້າໃນໄລຍະສັ້ນ ຫຼື ໄລຍະຍາວໃນເອກະສານລາຍງານການເງິນການປີ ແບບສັງລວມ ແລະ ແບບແຍກກິດຈະການ ແລະ ໃຫ້ຫັກຄ່າເສື່ອມມູນຄ່າຕາມໄລຍະເວລາທີ່ຊຳລະ ຫຼື ໄລຍະເວລາທີ່ເກີດຜົນປະໂຫຍດທາງດ້ານເສດຖະກິດທີ່ກ່ຽວຂ້ອງກັບຄ່າໃຊ້ຈ່າຍເຫຼົ່ານີ້.

ລາຍຈ່າຍປະເພດຕ່າງໆເຫຼົ່ານີ້ແມ່ນຖືກບັນທຶກເປັນລາຍຈ່າຍລ່ວງໜ້າໄລຍະຍາວ ແລະ ຫັກຄ່າເສື່ອມມູນຄ່າໃນໃບລາຍງານຜົນການດຳເນີນງານການປີແບບສັງລວມ ແລະ ແບບແຍກກິດຈະການ.

3.9 ການສັງລວມທຸລະກິດ ແລະ ຄ່ານິຍົມ

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບທຸລະກິດພາຍໃຕ້ການຄວບຄຸມຮ່ວມກັນ

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບຫົວໜ່ວຍທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ແມ່ນການສັງລວມບັນດາຫົວໜ່ວຍທຸລະກິດ ຫຼື ກິດຈະການສຸດທ້າຍຖືກຄວບຄຸມໂດຍພາກສ່ວນດຽວ ຫຼື ພາກສ່ວນດຽວກັນທັງກ່ອນ ແລະ ຫຼັງຈາກການສັງລວມທຸລະກິດ, ແລະ ການຄວບຄຸມນັ້ນບໍ່ແມ່ນການຄວບຄຸມຊົ່ວຄາວ.

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບຫົວໜ່ວຍທຸລະກິດພາຍໃຕ້ການຄວບຄຸມຮ່ວມກັນແມ່ນໄດ້ສະແດງລາຍລະອຽດດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນຂອງສອງຫົວໜ່ວຍທຸລະກິດລວມແມ່ນສະແດງຢູ່ໃນຍອດມູນຄ່າຕາມບັນຊີໃນວັນທີທີ່ສັງລວມທຸລະກິດ;
- ບໍ່ມີການຮັບຮູ້ຄ່ານິຍົມຈາກການສັງລວມທຸລະກິດ;
- ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ສະທ້ອນເຖິງຜົນລັບຂອງການສັງລວມທຸລະກິດນັບແຕ່ມື້ທີ່ສັງລວມທຸລະກິດກັນ; ແລະ
- ຜົນຕ່າງລະຫວ່າງຜົນຕອບແທນຂອງການຈ່າຍ ແລະ ຊັບສິນສຸດທິຂອງຜູ້ຊື້ຈະຖືກບັນທຶກໄວ້ໃນສ່ວນຂອງຜູ້ຖືຮຸ້ນ.

3.10 ການບັນຊີສຳລັບກຸ່ມບໍລິສັດ - ການລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

3.10.1 ບໍລິສັດໃນເຄືອ

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການ. ກຸ່ມບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກສັງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ກຸ່ມບໍລິສັດ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມສິ້ນສຸດ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງກຸ່ມບໍລິສັດແມ່ນຈະຖືກລົບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນບົດອະທິບາຍເລກທີ 4.1.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.10 ການບັນຊີສຳລັບກຸ່ມບໍລິສັດ - ການລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

3.10.2 ວິສະຫະກິດຂາຮຸ້ນ

ວິສະຫະກິດຂາຮຸ້ນແມ່ນຫົວໜ່ວຍທຸລະກິດທັງໝົດທີ່ກຸ່ມບໍລິສັດມີອຳນາດຢ່າງມີສາລະສຳຄັນ ແຕ່ບໍ່ສາມາດຄວບຄຸມ ຫຼື ມີອຳນາດຄວບຄຸມ. ການລົງທຶນໃນວິສະຫະກິດຂາຮຸ້ນແມ່ນຮັບຮູ້ໃນເບື້ອງຕົ້ນດ້ວຍຕົ້ນທຶນ ແລະ ຮັບຮູ້ພາຍຫຼັງດ້ວຍວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ລາຍຊື່ຂອງວິສະຫະກິດຂາຮຸ້ນຂອງບໍລິສັດແມ່ນຖືກອະທິບາຍໃນບົດອະທິບາຍເລກທີ 4.2.

3.10.3 ບໍລິສັດຮຸ້ນສ່ວນ

ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນກຸ່ມບໍລິສັດຮ່ວມກັນຄວບຄຸມ, ແຕ່ບໍ່ສາມາດຄວບຄຸມແບບເດັດຂາດແຕ່ພຽງຜູ້ດຽວ. ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນຮັບຮູ້ໃນເບື້ອງຕົ້ນດ້ວຍຕົ້ນທຶນ ແລະ ຮັບຮູ້ພາຍຫຼັງດ້ວຍວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ລາຍຊື່ຂອງລາຍຊື່ຂອງບໍລິສັດຮຸ້ນສ່ວນ ແມ່ນຖືກອະທິບາຍໃນບົດອະທິບາຍເລກທີ 4.3.

3.10.4 ການບັນຊີຕາມວິທີສ່ວນໄດ້ເສຍ

ພາຍໃຕ້ວິທີການສ່ວນໄດ້ເສຍ, ການລົງທຶນໃນວິສະຫະກິດຂາຮຸ້ນ ແລະ ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນໃຊ້ວິທີຄິດໄລ່ກຳໄລຕາມສ່ວນໄດ້ເສຍ. ພາຍໃຕ້ວິທີການນີ້ ສ່ວນແບ່ງຂອງກຳໄລ ຫຼື ຂາດທຶນ ຂອງບໍລິສັດຮຸ້ນສ່ວນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ. ການປ່ຽນແປງພາຍຫຼັງແມ່ນຈະປັບປຸງກັບມູນຄ່າຕາມບັນຊີຂອງເງິນລົງທຶນ. ເມື່ອມີການຂາດທຶນຂອງສ່ວນແບ່ງກຳໄລຂອງກຸ່ມບໍລິສັດ ມູນຄ່າຫຼາຍກວ່າ ຫຼື ເທົ່າກັບ ມູນຄ່າເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ເງິນລົງທຶນໃນບໍລິສັດຮຸ້ນສ່ວນ, ກຸ່ມບໍລິສັດຈະບໍ່ໄດ້ຮັບຮູ້ຜົນຂາດທຶນທີ່ເກີດຂຶ້ນ ຍົກເວັ້ນເສຍແຕ່ກຸ່ມບໍລິສັດມີພັນທະ ຫຼື ຕ້ອງຊຳລະເງິນແທນ ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ. ນະໂຍບາຍການບັນຊີຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ມີການປ່ຽນແປງເມື່ອເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ.

3.10.5 ເອກະສານລາຍງານການເງິນກາງປີແບບແຍກກິດຈະການ

ໃນເອກະສານລາຍງານການເງິນກາງປີແບບແຍກກິດຈະການ ເງິນລົງທຶນໃນບໍລິສັດໃນເຄືອ ແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ. ເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນຄິດໄລ່ຕາມກຳໄລຕາມສັດສ່ວນຮຸ້ນ.

3.10.6 ເງິນລົງທຶນທົ່ວໄປ

ເງິນລົງທຶນນອກເໜືອຈາກ ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແລະ ເງິນລົງທຶນທີ່ບໍ່ໄດ້ມີຢູ່ໃນຄວາມຕ້ອງການຂອງຕະຫຼາດ ແມ່ນຈະຖືກຈັດປະເພດໃຫ້ເປັນເງິນລົງທຶນທົ່ວໄປ. ເງິນລົງທຶນຈະຖືກຮັບຮູ້ໃນເບື້ອງຕົ້ນ ແລະ ຕໍ່ມາ ເປັນມູນຄ່າຕົ້ນທຶນເດີມ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.11 ເງິນລົງທຶນໄລຍະສັ້ນ

ເງິນລົງທຶນໄລຍະສັ້ນເປັນເງິນລົງທຶນທີ່ຖືໄວ້ຈົນຄົບກຳນົດໂດຍບັນທຶກບັນຊີຕາມມູນຄ່າທາງບັນຊີ ແລະ ດອກເບ້ຍແມ່ນຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການຕາມທີ່ໄດ້ລະບຸໃນຂໍ້ຕົກລົງທີ່ກ່ຽວຂ້ອງ.

3.12 ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ ຖືກຮັບຮູ້ຕາມຈຳນວນຕາມຈຳນວນທີ່ຕ້ອງຈ່າຍຄືນໃນອະນາຄົດສຳລັບ ສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າຈະຖືກຮຽກເກັບເງິນຈາກກຸ່ມບໍລິສັດ ຫຼື ບໍ່ກໍ່ຕາມ.

3.13 ເງິນແຮ

ເງິນແຮຖືກຮັບຮູ້ ເມື່ອກຸ່ມບໍລິສັດມີພາລະຜູກພັນໃນປັດຈຸບັນ (ທາງກົດໝາຍ ຫຼື ທາງອື່ນໆ) ເຊິ່ງເກີດຈາກເຫດການຜ່ານມາ, ອາດເປັນໄປໄດ້ວ່າການໄຫຼອອກຂອງຊັບພະຍາກອນທີ່ມີມູນຄ່າທາງເສດຖະກິດ ເພື່ອຊຳລະພາລະຜູກພັນ ແລະ ຈຳນວນເງິນຂອງພາລະຜູກພັນທີ່ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້.

3.14 ຮຸ້ນກູ້

ຮຸ້ນກູ້ແມ່ນໄດ້ອອກຈຳໜ່າຍຕາມມູນຄ່າກຳນົດ ແລະ ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າກຳນົດໂດຍການຫັກຕົ້ນທຶນການຈັດຈຳໜ່າຍ. ຫຼັງຈາກນັ້ນ, ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າຕົ້ນທຶນຫັກທົດແທນ, ສ່ວນຕ່າງລະຫວ່າງຜົນຕອບແທນ (ຫັກດ້ວຍຕົ້ນທຶນການດຳເນີນການ) ແລະ ມູນຄ່າໄຖ່ຖອນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ ຕະຫຼອດໄລຍະເວລາຂອງການກູ້ຢືມ ໂດຍນຳໃຊ້ວິທີອັດຕາຜົນຕອບແທນທີ່ແທ້ຈິງ.

ຕົ້ນທຶນໃນການອອກຮຸ້ນກູ້ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນກູ້ໂດຍກົງ ເຊິ່ງລວມຄ່າທີ່ປຶກສາທາງການເງິນ, ຄ່າທີ່ປຶກສາທາງກົດໝາຍ ແລະ ຄ່າທຳນຽມຕ່າງໆ. ຄ່າໃຊ້ຈ່າຍເຫຼົ່ານີ້ແມ່ນໄດ້ບັນທຶກໃນບັນຊີຊັບສິນລໍຖ້າສະສາງ ແລະ ຈະສະສາງ ແລະ ຮັບຮູ້ໃນໃບລາຍງານຜົນໄດ້ຮັບການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການໂດຍອີງຕາມອາຍຸຂອງຮຸ້ນກູ້.

ຮຸ້ນກູ້ແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ຍົກເວັ້ນກຸ່ມບໍລິສັດບໍ່ມີເງື່ອນໄຂໃນການເລື່ອນການຊຳລະໜີ້ ຈະສາມາດເລື່ອນການຊຳລະໜີ້ອອກໄປອີກ ໃນໄລຍະເວລາຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ສິ້ນສຸດການລາຍງານ.

3.15 ການອານຸພັນ

ສັນຍາແລກປ່ຽນເງິນຕາຕ່າງປະເທດ

ນະມື້ເລີ່ມຕົ້ນ, ຈຳນວນເງິນຕົ້ນໃນການເຮັດທຸລະກຳແລກປ່ຽນເງິນຕາຕ່າງປະເທດແມ່ນບັນທຶກເປັນສັນຍາແລກປ່ຽນຂອງໜີ້ຕ້ອງຮັບໂດຍການນຳໃຊ້ອັດຕາແລກປ່ຽນທັນທີ ແລະ ສັນຍາແລກປ່ຽນຂອງໜີ້ຕ້ອງສົ່ງແມ່ນໃຊ້ອັດຕາແລກປ່ຽນຕາມການຕົກລົງກັນໃນຂໍ້ຕົກລົງການແລກປ່ຽນ. ໂດຍສ່ວນຕ່າງຈະສະແດງເປັນສ່ວນເກີນ ຫຼື ສ່ວນຫຼຸດໃນໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ, ເຊິ່ງຈະຄິດໄລ່ຄ່າເສື່ອມໃນໃບລາຍງານຜົນການດຳເນີນງານກາງປີແບບສັງລວມ ແລະ ແບບແຍກກິດຈະການໂດຍນຳໃຊ້ວິທີເສັ້ນຊື່ຕະຫຼອດໄລຍະເວລາຂອງສັນຍາ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.15 *ການສານອນຸພັນ* (ຕໍ່)

ສັນຍາແລກປ່ຽນເງິນຕາຕ່າງປະເທດ (ຕໍ່)

ນອກຈາກນີ້, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງແມ່ນຈະປ່ຽນເປັນເງິນກີບໂດຍການນຳໃຊ້ອັດຕາແລກປ່ຽນພາຍໃນມື້ລາຍງານ. ເຊິ່ງສ່ວນຕ່າງຂອງການແລກປ່ຽນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

ມູນຄ່າສຸດທິຂອງສັນຍາແລກປ່ຽນຂອງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງແມ່ນໄດ້ສະແດງໃນໃບລາຍງານຖານະການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ.

ມູນຄ່າດອກເບ້ຍໃນສັນຍາອັດຕາດອກເບ້ຍແມ່ນບັນທຶກເປັນມູນຄ່າສຸດທິຂອງ ໃບລາຍງານຜົນການດຳເນີນງານສັງລວມ ຂອງສັນຍາແລກປ່ຽນໜີ້ຕ້ອງຮັບໄດ້ນຳໃຊ້ອັດຕາດອກເບ້ຍຄົງທີ່ສຳລັບເງິນບາດ ແລະ ສັນຍາແລກປ່ຽນໜີ້ຕ້ອງສິ່ງແມ່ນນຳໃຊ້ອັດຕາດອກເບ້ຍຄົງທີ່ສຳລັບເງິນໂດລາສະຫະລັດ ຕາມການຕົກລົງໃນຂໍ້ຕົກລົງສັນຍາເມື່ອມີການຈ່າຍດອກເບ້ຍ.

3.16 *ການຮັບຮູ້ລາຍຮັບ*

ລາຍຮັບສ່ວນໃຫຍ່ແມ່ນປະກອບດ້ວຍລາຍຮັບຈາກການຂາຍໄຟຟ້າ ແລະ ການບໍລິການ ເຊິ່ງລວມຄ່າທຳນຽມການຕິດຕັ້ງ ແລະ ລາຍຮັບເງິນປັນຜົນ.

ການຂາຍໄຟຟ້າ

ບັນຊີກຸ່ມບໍລິສັດສຳລັບການຂາຍໃນເວລາທີ່:

- ມີສັນຍາຊື້-ຂາຍໄຟຟ້າລາວ ("PPA");
- ການສິ່ງກະແສໄຟຟ້າ;
- ລາຄາປະລິມານໄດ້ຮັບການສ້າງຕັ້ງຂຶ້ນ ຫຼື ສາມາດໄດ້ຮັບການກຳນົດ;
- ລາຍຮັບທີ່ກ່ຽວຂ້ອງແມ່ນຈະໄດ້ຮັບການຟື້ນຟູ.

ການສິ່ງໃຊ້ເວລາສະຖານທີ່ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງກັບການເປັນເຈົ້າຂອງໄດ້ຖືກໂອນໃຫ້ກັບຜູ້ຊື້. ໂດຍທົ່ວໄປ ລາຍຮັບຈາກການຂາຍກະແສໄຟຟ້າຄິດໄລ່ຈາກໜ່ວຍໄຟໃນຈຸດນຳສິ່ງຄູນອັດຕາທີ່ຕົກລົງກັນ ແລະ ກຳນົດໃນສັນຍາຊື້ກະແສໄຟຟ້າ.

ການບໍລິການອື່ນໆ

ການບໍລິການອື່ນໆ ໂດຍສ່ວນໃຫຍ່ແລ້ວປະກອບມີ ຄ່າທຳນຽມຕິດຕັ້ງ, ເຊິ່ງຈະລົງບັນຊີຮັບຮູ້ ເມື່ອການບໍລິການສຳເລັດ.

ລາຍຮັບຈາກການດຳເນີນງານ ແລະ ການບໍລິການບຳລຸງຮັກສາໃຫ້ເຂື່ອນ

ລາຍຮັບຈາກການດຳເນີນງານ ແລະ ການບໍລິການການບຳລຸງຮັກສາໃຫ້ເຂື່ອນ ຈະຖືກຮັບຮູ້ເມື່ອການບໍລິການສຳເລັດ ແລະໄດ້ຖືກຮັບອະນຸມັດຈາກລູກຄ້າແລ້ວ. ໂດຍທົ່ວໄປແລ້ວ, ລາຍຮັບຈະຖືກຮັບຮູ້ເມື່ອການບໍລິການໄດ້ສຳເລັດ ແລະ ນຳສິ່ງໃຫ້ລູກຄ້າ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.16 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ການລົງບັນຊີເມື່ອເກີດສິດໃນການຮັບເງິນປັນຜົນ, ເຊິ່ງໂດຍປົກກະຕິແລ້ວຈະມີການຮັບຮູ້ເມື່ອຜູ້ຖືຮຸ້ນມີສິດຈະໄດ້ຮັບການຊຳລະ.

3.17 ຜົນປະໂຫຍດຂອງພະນັກງານ

ເງິນແຮສຳລັບຜົນປະໂຫຍດຂອງພະນັກງານ ແມ່ນບໍ່ໄດ້ຕັ້ງໄວ້ໃນແຕ່ລະປີ. ໜີ້ສິນໄດ້ຖືກຮັບຮູ້ໄວ້ໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການສຳລັບຈຸດປະສົງພິເສດ ແລະ ລາຍຈ່າຍທີ່ກ່ຽວຂ້ອງກັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບອີງຕາມຈຳນວນຕົວຈິງ. ຈຳນວນເງິນເຫຼົ່ານີ້ຈະຖືກຈ່າຍໃນເວລາທີ່ພະນັກງານລາອອກ ຫຼື ອອກບຳນານ.

ພັນທະຕໍ່ເງິນຜົນປະໂຫຍດອື່ນໆຂອງພະນັກງານ

ກຸ່ມບໍລິສັດມີເງິນຜົນປະໂຫຍດອື່ນໆໃຫ້ແກ່ພະນັກງານເຊັ່ນ ກອງທຶນປະກັນສັງຄົມຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ກຸ່ມບໍລິສັດຍັງໄດ້ມີຜົນປະໂຫຍດໃຫ້ພະນັກງານເຊັ່ນໃບບັດປະຈຳປີ.

ກຸ່ມບໍລິສັດຮັບຮູ້ລາຍຈ່າຍ ແລະ ໜີ້ສິນທີ່ກ່ຽວຂ້ອງກັບເງິນຜົນປະໂຫຍດຂອງພະນັກງານ ເມື່ອມີລາຍຈ່າຍ ແລະ ໜີ້ສິນເກີດຂຶ້ນ.

3.18 ອາກອນ

ກຸ່ມບໍລິສັດບັນທຶກອາກອນກຳໄລບົນພື້ນຖານການຄ້າງຊຳລະ ແລະ ມູນຄ່າສຸດທິ. ກຸ່ມບໍລິສັດຈະບໍ່ຮັບຮູ້ໜີ້ຕ້ອງສິ່ງ ຫຼື ໜີ້ຕ້ອງຮັບອາກອນກຳໄລໃນອະນາຄົດທີ່ເປັນສ່ວນຕ່າງຊົ່ວຄາວ. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຂອງປີ ຫຼັງຈາກມີການດັດແກ້ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກອາກອນ ແລະ ລາຍການອື່ນໆອີງຕາມກົດໝາຍວ່າດ້ວຍອາກອນລາວ ແລະ ອັດຕາຄິດໄລ່ອາກອນ. ອີງຕາມກົດໝາຍວ່າດ້ວຍອາກອນລາວ ແລະ ກົດໝາຍວ່າດ້ວຍການບັນຊີ. ລາຍຈ່າຍອາກອນພາຍໃນປີແມ່ນໄດ້ກຳນົດບົນພື້ນຖານຂອງກຳໄລຂອງແຕ່ລະບໍລິສັດທີ່ໄດ້ມີການຄິດໄລ່. ສຳລັບຈຸດປະສົງການນຳສະເໜີເອກະສານລາຍງານການເງິນແບບສັງລວມ, ໜີ້ຕ້ອງສິ່ງອາກອນກຳໄລ ແລະ ລາຍຈ່າຍລ່ວງໜ້າຂອງບໍລິສັດ ສ່ວນຕ່າງແມ່ນມີການຫັກລ້າງ ແລະ ນຳສະເໜີບົນພື້ນຖານມູນຄ່າສຸດທິ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.18 *ອາກອນ* (ຕໍ່)

ພັນທະອາກອນອື່ນໆປະກອບມີອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນພັນທະອາກອນທີ່ກຳນົດຕາມລາຍຮັບສຳລັບໄລຍະເວລາທີ່ໄດ້ນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ຂອງພະນັກງານແມ່ນພັນທະອາກອນໂດຍອີງຕາມເງິນເດືອນທີ່ຈ່າຍໃຫ້ພະນັກງານໃນໄລຍະເວລາທີ່ກຳນົດໂດຍການນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

3.19 *ສ່ວນຂອງຜູ້ຖືຮຸ້ນ*

ທຶນຈົດທະບຽນ

ທຶນຈົດທະບຽນ, ໂດຍປົກກະຕິແລ້ວຊຳລະເປັນເງິນສົດ ຫຼື ຊັບສິນຄົງທີ່, ໂດຍລັດວິສາຫະກິດໄຟຟ້າລາວ, ທີ່ຖືກຮັບຮູ້ ແລະ ນຳສະເໜີຕາມມູນຄ່າຕົ້ນທຶນ ຫຼື ມູນຄ່າທີ່ໄດ້ລະບຸໃນໃບທະບຽນວິສາຫະກິດ.

ຄັງສະສົມຕາມລະບຽບການ

ອີງຕາມມາດຕາທີ 156 ຂອງກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ ລົງວັນທີ 26 ທັນວາ 2013, ຮຽກຮ້ອງໃຫ້ມີການຈັດສັນກຳໄລສຸດທິມາເປັນຄັງສະສົມຕາມລະບຽບການຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີຂອງບໍລິສັດ. ເມື່ອຄັງສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນແລ້ວ ບໍລິສັດອາດຈະຢຸດການສະສົມຄັງດັ່ງກ່າວ ເວັ້ນເສຍແຕ່ວ່າຈະກົດໝາຍຈະລະບຸເປັນຢ່າງອື່ນ.

ການປະກອບຜົນກຳໄລເຂົ້າໃນທຶນຂະຫຍາຍທຸລະກິດແມ່ນຂຶ້ນກັບການຕັດສິນໃຈຂອງຜູ້ຖືຮຸ້ນຂອງບໍລິສັດ.

3.20 *ກຳໄລພື້ນຖານຕໍ່ຮຸ້ນ*

ກຳໄລຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການຫານກຳໄລສຸດທິຕໍ່ກັບຜູ້ຖືຮຸ້ນສາມັນຂອງກຸ່ມບໍລິສັດ ໂດຍການສະເລ່ຍຍອດເຫຼືອຈຳນວນຮຸ້ນສາມັນພາຍໃນປີ.

ກຳໄລຕໍ່ຮຸ້ນປັບລົດຈະບໍ່ຖືກຄິດໄລ່ ແລະ ບໍ່ຖືກນຳສະເໜີ

3.21 *ຂໍ້ມູນຈຳແນກຕາມສ່ວນງານ*

ສ່ວນງານ ແມ່ນອົງປະກອບທີ່ກຳນົດໂດຍບໍລິສັດເຊິ່ງມີສ່ວນຮ່ວມໃນການຈັດຫາຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການຈັດຫາຜະລິດຕະພັນ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດ (ສ່ວນທາງພູມີສາດ) ທີ່ອາດຈະກໍ່ໃຫ້ເກີດມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກສ່ວນງານອື່ນໆ.

ທຸລະກິດຫຼັກຂອງກຸ່ມບໍລິສັດຕາມໃບທະບຽນວິສາຫະກິດ ແມ່ນການຜະລິດໄຟຟ້າ ໂດຍອີງຕາມຊັບສິນການຜະລິດທີ່ໂອນຍ້າຍເພື່ອຜະລິດກະແສໄຟຟ້າໂດຍອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້-ຂາຍພະລັງງານ ("PPA") ເປັນຫຼັກ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງກຸ່ມບໍລິສັດຈະບໍ່ໄດ້ຮັບຜົນກະທົບຈາກການໃຫ້ບໍລິການຂອງກຸ່ມບໍລິສັດ ຫຼື ສະຖານທີ່ທີ່ກຸ່ມບໍລິສັດດຳເນີນທຸລະກິດຢູ່. ສິ່ງຜົນໃຫ້ຄະນະຜູ້ບໍລິຫານຂອງກຸ່ມບໍລິສັດມີຄວາມເຫັນວ່າມີພຽງສ່ວນງານດຽວສຳລັບທຸລະກິດ ແລະ ທາງພູມີສາດ ແລະ ດັ່ງນັ້ນ, ຈຶ່ງບໍ່ມີຄວາມຈຳເປັນໃນການນຳສະເໜີຂໍ້ມູນຕາມສ່ວນງານ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

4.1 ເງິນລົງທຶນໃນບໍລິສັດໃນເຄືອ

		% ຄວາມເປັນເຈົ້າຂອງ		*ຈຳນວນເງິນລົງທຶນ (ເອກະສານລາຍງານການເງິນ ແບບແຍກກິດຈະການ)*	
	ຂະແໜງທຸລະກິດ	*30 ມິຖຸນາ 2025 %*	*31 ທັນວາ 2024 %*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ເງິນລົງທຶນໃນບໍລິສັດໃນເຄືອ					
ບໍລິສັດ ນ້ຳບີ ພາວເວີ ຈຳກັດ (i)	ຜະລິດໄຟຟ້າ	80	80	375,921	375,921
ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີ ແອວ-ເຈັນ ຈຳກັດຜູ້ດຽວ (ii)	ບໍລິການການບຳລຸງຮັກສາ	100	100	2,400	2,400
				378,321	**378,321**

(i) ບໍລິສັດ ນ້ຳບີ ພາວເວີ ຈຳກັດ ("ນ້ຳບີ") ໄດ້ສ້າງຕັ້ງຂຶ້ນໃນປີ 2016 ຢູ່ ສປປ ລາວ ໂດຍທຸລະກິດຫຼັກຂອງບໍລິສັດ ແມ່ນການຜະລິດກະແສໄຟຟ້າຈາກໂຄງການກໍ່ສ້າງເຂື່ອນນ້ຳບີ ທີ່ຕັ້ງຢູ່ ເມືອງດາກຈຶງ ແຂວງເຊກອງ. ເຊິ່ງໂຄງການແມ່ນຍັງຢູ່ໃນໄລຍະການກໍ່ສ້າງ ນະມື້ທີ່ອອກເອກະສານລາຍງານການເງິນ.

(ii) ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ ແມ່ນໄດ້ສ້າງຕັ້ງຂຶ້ນໃນປີ 2017 ຢູ່ ສປປ ລາວ, ໂດຍມີທຸລະກິດຫຼັກໃນການໃຫ້ບໍລິການສ້ອມແປງ ແລະ ສຳນັກງານໃຫຍ່ຕັ້ງຢູ່ຖະໜົນມິດຕະພາບລາວ-ໄທ, ຕຶກສຸນຝຶກອົບຮົມ ຟຟລ ຫ້ອງເລກ 602, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ກ່ອງໄປສະນີ.2392, ສປປ ລາວ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 ເງິນລົງທຶນໃນບໍລິສັດຂາຮຸ້ນ

ຫົວໜ່ວຍ: ລ້ານກີບ

	ນ້ຳງື່ມ 2	ນ້ຳລີກ 1-2	ນ້ຳງື່ມ 5	ນ້ຳແບ໋ງ	ນ້ຳລອ໋ງ	ໄຊຍະບຸລີ	ນ້ຳມັ໋ງ 1	ນ້ຳທາ 1	ລວມ
ນະວັນທີ 1 ມັ໋ງກອນ 2024	**598,972**	**125,816**	**174,374**	**44,198**	**10,954**	**4,044,199**	**63,100**	**-**	**5,061,613**
ສ່ວນແບ່ງກຳໄລ/(ຂາດທຶນ) ສຸດທິ ຕາມວິທີສ່ວນໄດ້ເສຍ	100,690	9,063	13,454	1,345	702	(101,357)	6,923	-	30,821
ຜົນກະທົບຈາກອັດຕາແລກປ່ຽນ	831	411	611	-	-	(837)	-	-	1,016
ຫັກ:									
ເງິນປັນຜົນຮັບພາຍໃນໄລຍະ	(32,266)	-	-	-	-	-	-	-	(32,266)
ນະວັນທີ 30 ມິຖຸນາ 2024	**668,227**	**135,291**	**188,439**	**45,543**	**11,656**	**3,942,006**	**70,023**	**-**	**5,061,185**
ນະວັນທີ 1 ມັ໋ງກອນ 2025	**783,311**	**146,165**	**205,355**	**42,306**	**13,068**	**4,120,891**	**77,919**	**-**	**5,389,015**
ກຳໄລ/(ຂາດທຶນ) ຮຸ້ນສຸດທິຕາມວິທີ ການຄິດໄລ່ສັດສ່ວນ	109,434	5,429	24,459	-	(188)	69,118	9,705	-	217,957
ຜົນກະທົບຈາກອັດຕາແລກປ່ຽນ	2,882	(8)	(34)	-	-	1,820	-	-	4,660
ຫັກ:									
ເງິນປັນຜົນຮັບພາຍໃນໄລຍະ	(48,500)	-	-	-	-	-	-	-	(48,500)
ນະວັນທີ 30 ມິຖຸນາ 2025	**847,127**	**151,586**	**229,780**	**42,306**	**12,880**	**4,191,829**	**87,624**	**-**	**5,563,132**

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 *ເງິນລົງທຶນໃນບໍລິສັດຂາຮຸ້ນ (ຕໍ່)*

ເງິນລົງທຶນໃນວິສາຫະກິດຂາຮຸ້ນມີດັ່ງລຸ່ມນີ້:

		ການປະກອບສ່ວນທຶນ	
		30 ມິຖຸນາ 2025	*31 ທັນວາ 2024*
		ລ້ານກີບ	*ລ້ານກີບ*
ບໍລິສັດ ນ້ຳງື່ມ 2 ພາວເວີ ຈຳກັດ	(ກ)	454,742	454,742
ບໍລິສັດ ນ້ຳລີກ 1-2 ພາວເວີ ຈຳກັດ	(ຂ)	32,240	32,240
ບໍລິສັດ ນ້ຳງື່ມ 5 ພາວເວີ ຈຳກັດ	(ຄ)	80,022	80,022
ນ້ຳແບ່ງ ພາວເວີ ຈຳກັດ	(ງ)	18,162	18,162
ນ້ຳລອງ ພາວເວີ ຈຳກັດ	(ຈ)	5,537	5,537
ໄຊຍະບຸລີ ພາວເວີ ຈຳກັດ	(ສ)	3,172,963	3,172,963
ນ້ຳມັ່ງ 1 ພາວເວີ ຈຳກັດ	(ຊ)	37,596	37,596
ນ້ຳທາ 1 ພາວເວີ ຈຳກັດ	(ຍ)	244,474	244,474

(ກ) ນ້ຳງື່ມ 2 ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳງື່ມ 2 (615 ມວ) ຕັ້ງຢູ່ເຂື່ອນນ້ຳງື່ມແຂວງ ວຽງຈັນ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນປີ 2007 ລະຫວ່າງລັດຖະບານ ແລະ ບໍລິສັດນ້ຳງື່ມ 2 ຈຳກັດ. ບໍລິສັດນ້ຳງື່ມ 2 ຈຳກັດ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2010 ເປັນຕົ້ນມາ.

(ຂ) ນ້ຳລີກ 1-2 ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ, ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳລີກ 1-2 (100ມວ) ຕັ້ງຢູ່ເຂື່ອນນ້ຳລີກແຂວງ ວຽງຈັນ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານລົງວັນທີ 30 ຕຸລາ 2006 ລະຫວ່າງລັດຖະບານ ລາວ ("ລບລ"), ຕາງໜ້າໂດຍຄະນະກຳມະການ ວາງແຜນ ແລະ ການລົງທຶນ ແລະ ບໍລິສັດໄຟຟ້ານ້ຳລີກ 1-2 ຈຳກັດ. ບໍລິສັດໄຟຟ້ານ້ຳລີກ 1-2 ຈຳກັດ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2010 ເປັນຕົ້ນມາ.

(ຄ) ນ້ຳງື່ມ 5 ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ, ກໍ່ສ້າງ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳງື່ມ 5 (120 ມວ) ຕັ້ງຢູ່ເຂື່ອນນ້ຳຕິ່ງແຂວງ ວຽງຈັນ ແລະ ໂຮງໄຟຟ້າຢູ່ແຂວງຊຽງຂວາງ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນເດືອນ ມັງກອນ 2007 ລະຫວ່າງລັດຖະບານລາວ ("ລບລ") ແລະ ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ. ສະຖານີໄຟຟ້າຂອງບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ ໄດ້ສຳເລັດໃນປີ 2012 ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013 ເປັນຕົ້ນມາ.

(ງ) ນ້ຳແບ່ງ ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳແບ່ງ, ຕັ້ງຢູ່ແຂວງ ອຸດົມໄຊ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2016.

(ຈ) ນ້ຳລອງ ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳລອງ, ຕັ້ງຢູ່ແຂວງ ຫຼວງນ້ຳທາ ພາຍໃຕ້ສັນຍາສຳປະທານໃນປີ 2011 ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013.

(ສ) ໄຊຍະບຸລີ ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການຜະລິດໄຟຟ້າ ໄຊຍະບຸລີ, ຕັ້ງຢູ່ແຂວງ ໄຊຍະບຸລີ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013 ເປັນຕົ້ນມາ.

(ຊ) ນ້ຳມັ່ງ 1 ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳມັ່ງ 1, ຕັ້ງຢູ່ແຂວງ ບໍລິຄຳໄຊ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2012 ເປັນຕົ້ນມາ.

(ຍ) ນ້ຳທາ 1 ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້ານ້ຳທາ (168ມວ) ຢູ່ນ້ຳທາ ແຂວງ ບໍ່ແກ້ວ ແລະ ແຂວງ ຫຼວງນ້ຳທາ, ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2019 ເປັນຕົ້ນມາ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 *ເງິນລົງທຶນໃນບໍລິສັດຮຸ້ນສ່ວນ*

ຫົວໜ່ວຍ: ລ້ານກີບ

	ເຫີນ-ຫີນບຸນ	ຫ້ວຍເຫາະ	ຫ້ວຍລຳພັນ ຕອນລຸ່ມ	ນ້ຳດີກ 1	ນ້ຳຟຸນ	ອີແອນອີ	EDL-Gen RED	ນ້ຳເທີນ 1	ນ້ຳລີກ 1	ລວມ
ນະວັນທີ 1 ມັງກອນ 2024	**3,301,136**	**44,081**	**18,200**	**51,983**	**4,168**	**27,159**	**122,068**	**448,367**	**50,485**	**4,067,647**
ການເພີ່ມທຶນ	-	-	-	-	1,000	-	-	-	-	1,000
ສ່ວນແບ່ງກຳໄລ/(ຂາດທຶນ) ສຸດທິຕາມວິທີ ສ່ວນໄດ້ເສຍ	369,774	22,445	(1,704)	(136)	(1,747)	10,824	-	(125,080)	(5,764)	268,612
ຜົນກະທົບຈາກອັດຕາແລກປ່ຽນ	16,782	1,019	-	-	-	-	-	(5,677)	(262)	11,862
ຫັກ: ເງິນປັນຜົນຮັບພາຍໃນປີ	-	(20,010)	-	-	-	-	-	-	-	(20,010)
ນະວັນທີ 30 ມິຖຸນາ 2024	**3,687,692**	**47,535**	**16,496**	**51,847**	**3,422**	**37,982**	**122,068**	**317,610**	**44,459**	**4,329,111**
ນະວັນທີ 1 ມັງກອນ 2025	**3,443,071**	**52,510**	**15,172**	**51,797**	**3,868**	**44,020**	**122,068**	**427,455**	**39,432**	**4,199,393**
ກຳໄລ/(ຂາດທຶນ) ຕາມວິທີການຄິດໄລ່ ສັດສ່ວນຮຸ້ນ	653,840	22,832	(1,285)	2	(1,796)	7,623	-	(86,377)	1,016	595,855
ຜົນກະທົບຈາກອັດຕາແລກປ່ຽນ	(913)	(32)	-	-	-	-	-	121	(1)	(825)
ຫັກ: ເງິນປັນຜົນຮັບພາຍໃນປີ *(ບົດອະທິບາຍ 22)*	(694,008)	(22,819)	-	-	-	-	-	-	-	(716,827)
ນະວັນທີ 30 ມິຖຸນາ 2025	**3,401,990**	**52,491**	**13,887**	**51,799**	**2,072**	**51,643**	**122,068**	**341,199**	**40,447**	**4,077,596**

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 *ເງິນລົງທຶນໃນບໍລິສັດຮຸ້ນສ່ວນ* (ຕໍ່)

ເງິນລົງທຶນໃນບໍລິສັດຮຸ້ນສ່ວນມີດັ່ງລຸ່ມນີ້:

		ການປະກອບສ່ວນທຶນ	
		30 ມິຖຸນາ 2025	*31 ທັນວາ 2024*
		ລ້ານກີບ	*ລ້ານກີບ*
ເຫີນ-ຫີນບຸນ ພາວເວີ	(ກ)	1,120,696	1,120,696
ຫ້ວຍເຫາະ	(ຂ)	1,171	1,171
ຫ້ວຍລຳພັນຕອນລຸ່ມ	(ຄ)	38,218	38,218
ນ້ຳດີກ 1	(ງ)	54,942	54,942
ນ້ຳພຸນ ພາວເວີ	(ຈ)	20,716	20,716
ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ	(ສ)	4,800	4,800
EDL-Gen RED	(ຊ)	123,222	123,222
ນ້ຳເທີນ 1	(ຍ)	497,163	497,163
ນ້ຳລີກ 1	(ດ)	34,680	34,680

(ກ) ເຫີນ-ຫີນບຸນ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ເຫີນ-ຫີນບຸນ, ຕັ້ງຢູ່ເມືອງ ບໍລິຄຳໄຊ, ແຂວງ ຄຳມ່ວນ. ບໍລິສັດ ເຫີນ-ຫີນບຸນ ຈຳກັດ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 1998 ເປັນຕົ້ນມາ.

(ຂ) ຫ້ວຍເຫາະ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ຫ້ວຍເຫາະ, ຕັ້ງຢູ່ແຂວງ ອັດຕະປື. ບໍລິສັດ ໄຟຟ້າ ຫ້ວຍເຫາະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ ປີ 1999 ເປັນຕົ້ນມາ.

(ຄ) ຫ້ວຍລຳພັນຕອນລຸ່ມ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ຫ້ວຍລຳພັນຕອນລຸ່ມ, ຕັ້ງຢູ່ ເມືອງ ລາມາມ, ແຂວງ ເຊກອງ. ເຊິ່ງບໍລິສັດໄດ້ສຳເລັດ ການກໍ່ສ້າງໃນປີ 2024 ແລະ ປະຈຸບັນຢູ່ໃນຂັ້ນຕອນຂອງການເຈລະຈາສັນຍາການຊື້ໄຟຟ້າ (PPA).

(ງ) ນ້ຳດີກ 1 ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການ ໂຄງການເຂື່ອນໄຟຟ້ານ້ຳດີກ, ຕັ້ງຢູ່ແຂວງ ຫົວພັນ. ເຊິ່ງໂຄງການແມ່ນຍັງຢູ່ໃນໄລຍະການກໍ່ສ້າງ ນະມື້ທີ່ອອກ ເອກະສານລາຍງານການເງິນ.

(ຈ) ນ້ຳພຸນ ເປັນບໍລິສັດຮ່ວມທຶນຈຳກັດ ພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການ ເຂື່ອນໄຟຟ້ານ້ຳພຸນ, ຕັ້ງຢູ່ແຂວງ ໄຊຍະບຸລີ ເຊິ່ງໂຄງການແມ່ນຍັງຢູ່ໃນໄລຍະການກໍ່ສ້າງ ນະມື້ທີ່ອອກເອກະສານລາຍ ງານການເງິນ.

(ສ) ອີແອນອີ ກໍ່ຕັ້ງຂຶ້ນໂດຍ 2 ຄູ່ຮຸ້ນສ່ວນທຸລະກິດຄື: ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ, ບໍລິສັດໃນເຄືອຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດ ເອັກໂກ ເອັນຈີເນ່ຍລິ່ງ ແອນ ເຊີວິສ, ເຊິ່ງເປັນບໍລິສັດ ຊັ້ນນຳດ້ານການໃຫ້ບໍລິການ ແລະ ບຳລຸງຮັກສາໂຮງງານໄຟຟ້າຂອງໄທ. ບໍລິສັດ ໄດ້ສ້າງຕັ້ງໃນ ວັນທີ 15 ພະຈິກ 2018.

4. ເງິນລົງທຶນໃນບໍລິສັດໃນເຄືອ, ບໍລິສັດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 *ເງິນລົງທຶນໃນບໍລິສັດຮຸ້ນສ່ວນ* (ຕໍ່)

(ຊ) ໃນວັນທີ 22 ມີນາ 2019, ອີດີແອວ ເຈັນ ເຣດ໌ ໄດ້ເຊັນສັນຍາຮ່ວມທຶນກັບບໍລິສັດຄູ່ຮ່ວມສັນຍາ ປະກອບມີບໍລິສັດ AVIC- INTL Project Engineering Company ແລະ ບໍລິສັດ Guizhou Transportation Planning Survey and Design Academe. ອີງຕາມບົດບັນທຶກກອງປະຊຸມຜູ້ຖືຫຸ້ນ ໃນວັນທີ 18 ທັນວາ 2020 ແລະ ແຈ້ງການໃນ ວັນທີ 3 ທັນວາ 2024, ບໍລິສັດ ອີດີແອວ ເຈັນ ເຣດ໌ ແມ່ນຢູ່ໃນຂັ້ນຕອນຂອງການຍຸບຕົວລົງ.

(ຍ) ນ້ຳເທີນ 1 ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ, ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳເທີນ 1 (600 ມວ) ຢູ່ເຂື່ອນນ້ຳເທີນ ແຂວງ ບໍລິຄຳໄຊ, ສປປ ລາວ. ທຸລະ ກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນວັນທີ 14 ມິຖຸນາ 2016 ລະຫວ່າງລັດຖະບານລາວ ("ລບລ") ແລະ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ໄດ້ລິເລີ່ມຕົ້ນການດຳເນີນງານນັບຕັ້ງແຕ່ປີ 2022.

(ດ) ນ້ຳລີກ 1 ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການ ໂຄງການເຂື່ອນໄຟຟ້ານ້ຳລີກ 1, ພາຍໃຕ້ສັນຍາສຳປະທານໃນວັນທີ 6 ກຸມພາ 2013.

4.4 *ເງິນລົງທຶນອື່ນໆ*

		ມູນຄ່າເງິນລົງທຶນ	
		30 ມິຖຸນາ 2025	*31 ທັນວາ 2024*
	ຂະແໜງທຸລະກິດ	*ລ້ານກີບ*	*ລ້ານກີບ*
ບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດ	ຜະລິດໄຟຟ້າ	375,688	375,688
		375,688	**375,688**

ເງິນລົງທຶນນີ້ແມ່ນການລົງທຶນໃນບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດພາຍໃຕ້ຊື່ຂອງ ຟຟລ, ກຸ່ມບໍລິສັດໄດ້ນຳສະ ເໜີການລົງທຶນນີ້ເປັນເງິນລົງທຶນອື່ນໆເນື່ອງຈາກວ່າຍັງບໍ່ໄດ້ສຳເລັດການໂອນຮຸ້ນໂຄງການຈາກຊື່ ຟຟລ ມາເປັນ ຜ ຟຟລ, ໃນວັນທີ 18 ສິງຫາ 2011, ບໍລິສັດໄດ້ເຊັນສັນຍາຜູ້ຖືຮຸ້ນກັບບໍລິສັດ ຊີໂນໄຮໂດ ຄອບໂປເລຊັນ ຈຳກັດ ເພື່ອສ້າງຕັ້ງບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດ ("ນ້ຳອຸ"), ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ, ໂດຍເບື້ອງ ຕົ້ນມີທຶນຈົດທະບຽນ 300 ໂດລາສະຫະລັດຕໍ່ຮຸ້ນ. ຜ-ຟຟລຖືຄອງຮຸ້ນສາມັນຈຳນວນ 1,500 ຮຸ້ນ ທີ່ຖອກແລ້ວ ທຽບເທົ່າກັບ 15% ຂອງຮຸ້ນສາມັນທັງໝົດ. ກິດຈະກຳຫຼັກຂອງນ້ຳອຸແມ່ນໂຄງການເຂື່ອນໄຟຟ້ານ້ຳອຸ. ນະມື້ປິດລາຍງານ, ບໍລິສັດຍັງສືບຕໍ່ ການດຳເນີນການຍື່ນລາຍຊື່ຜູ້ຕາງໜ້າຂອງສະພາບໍລິຫານໃນບໍລິສັດດັ່ງກ່າວ.

ທຶນສຳຮອງໄດ້ມີການຈັດຕັ້ງຕາມສັນຍາຂອງຜູ້ຖືຮຸ້ນເພື່ອໃຫ້ເປັນໄປຕາມຂໍ້ກຳນົດການລົງທຶນໃນຮຸ້ນຈຳນວນ 265,000,000 ໂດລາສະຫະລັດສຳລັບໂຄງການ (ເຊິ່ງມີທຶນຈົດທະບຽນ 3,000,000 ໂດລາສະຫະລັດ) ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງທາງ ການເງິນ.

5. ເງິນລ່ວງໜ້າຊັບສິນພາຍໃຕ້ສັນຍາສຳປະທານ

ຂໍ້ມູນນີ້ກ່ຽວພັນກັບການຈ່າຍເງິນລ່ວງໜ້າໃຫ້ ຝຟລ, ສຳລັບຕົ້ນທຶນທີ່ເກີດຂຶ້ນຈາກຊັບສິນໂຄງການພາຍໃຕ້ບົດບັນທຶກຄວາມເຂົ້າໃຈ. ລາຍລະອຽດເງິນລ່ວງໜ້າມີດັ່ງຕໍ່ໄປນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຈ່າຍລ່ວງໜ້າສຳລັບການດຳເນີນງານ:				
ອີດີແອວເຈັນ ໂອແອນເອັມ	-	-	7,025	7,025
ຈ່າຍລ່ວງໜ້າໃຫ້ ຝຟລ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ:				
ນ້ຳຄານ 3 (ກ)	348,522	348,522	348,522	348,522
ນ້ຳຈຽນ (ກ)	678,504	678,504	678,504	678,504
ເຊເສັດ 3 (ກ)	149,418	149,418	149,418	149,418
ນ້ຳຫີນບຸນ (ຂ)	205,955	205,955	205,955	205,955
ນ້ຳງຶ່ມ 1 ຈັກເບີ 6 (ຄ)	247,374	247,374	247,374	247,374
ນ້ຳງຽບ 2 (ຄ)	111,470	111,470	111,470	111,470
ເຊລະໝານ 3 (ຄ)	232,164	232,164	232,164	232,164
	1,973,407	**1,973,407**	**1,980,432**	**1,980,432**

ເງິນລ່ວງໜ້າໃຫ້ ຝຟລ ສຳລັບຊັບສິນຢູ່ພາຍໃຕ້ສັນຍາສຳປະທານ

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ກຸ່ມບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຝຟລ ສຳລັບທຸກລາຍຈ່າຍທີ່ ຝຟລ ຈ່າຍຜ່ານມາ ຈົນຮອດມື້ສຳເລັດໂຄງການເທິງພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນກຳມະສິດຂອງໂຄງການທີ່ກ່ຽວຂ້ອງ. ພ້ອມກັນນີ້, ກຸ່ມບໍລິສັດມີໜ້າທີ່ຮັບຜິດຊອບໃນຊຳລະເງິນຄືນໃຫ້ ຝຟລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຝຟລ ຕາມທີ່ຕົກລົງເຫັນດີຂອງທັງສອງຝ່າຍຢ່າງຕໍ່ເນື່ອງ. ນອກຈາກນັ້ນ, ຝຟລ ອາດມີພາລະຜູກພັນທາງການເງິນກ່ຽວກັບໂຄງການດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ໃນສັນຍາ. ທັງສອງຝ່າຍແມ່ນຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນກຳມະສິດຂອງໂຄງການ, ກຸ່ມບໍລິສັດຈະຕ້ອງຈ່າຍຈຳນວນເງິນທີ່ເຫຼືອຫຼັງຈາກຫັກລົບກັບເງິນຈ່າຍລ່ວງໜ້າທີ່ກ່ຽວຂ້ອງໃຫ້ກັບ ຝຟລ.

(ກ) ໂຄງການທັງສາມນີ້ເຊິ່ງລວມມີ ນ້ຳຄານ 3, ນ້ຳຈຽນ ແລະ ເຊເສັດ 3 ແມ່ນຖືກໂອນກຳມະສິດຈາກ ຝຟລ ໃຫ້ກຸ່ມບໍລິສັດ ແລະ ກຸ່ມບໍລິສັດ ແມ່ນໄດ້ເລີ່ມດຳເນີນການຕັ້ງແຕ່ປີ 2020. ໂຄງການຈະຖືກໂອນໃຫ້ກຸ່ມບໍລິສັດຫຼັງຈາກໄດ້ຮັບການເຫັນດີໃນການຕົກລົງເລື່ອງພາລະຜູກພັນ ແລະ ເງື່ອນໄຂທີ່ຢູ່ໃນສັນຍາຊື້ຂາຍໄຟ (PPA). ນະວັນທີທີ່ອອກບົດລາຍງານ, ເງື່ອນໄຂທັງໝົດຍັງບໍ່ທັນສຳເລັດ.

ວັນທີ 29 ທັນວາ 2023, ຜ ຝຟລ ແລະ ຝຟລ ຕົກລົງທີ່ຈະປ່ຽນເງິນລ່ວງໜ້າ ໃຫ້ກັບ ຝຟລ ສຳລັບ ບໍລິສັດນ້ຳຈຽນ ເປັນບໍລິສັດ ຮ່ວມທຶນໃນນາມ ບໍລິສັດ ຜະລິດໄຟຟ້າ ນ້ຳຈຽນ ຈຳກັດ ໂດຍມີຂໍ້ຕົກລົງເບື້ອງຕົ້ນວ່າ ຜ - ຝຟລ ຖືຮຸ້ນ 26% ແລະ ຝຟລ ຖືຮຸ້ນ 74%. ຢ່າງໃດກໍຕາມ, ການຈັດຊື້ຮຸ້ນຍັງບໍ່ໄດ້ຂໍ້ສະຫຼຸບຈາກທັງສອງຝ່າຍ ແລະ ຈະຕ້ອງໄດ້ຮັບການກວດສອບອີກຄັ້ງກ່ຽວກັບ ຈຳນວນຮຸ້ນ ແລະ ເປີເຊັນການເປັນເຈົ້າຂອງ.

(ຂ) ໂຄງການນີ້ຍັງຢູ່ໃນຂັ້ນຕອນການກໍ່ສ້າງ ໃນວັນທີ 30 ມິຖຸນາ 2025.

(ຄ) ສຳລັບໂຄງການທັງ 3 ແຫ່ງໄດ້ແກ່: ໂຄງການນ້ຳງຶ່ມ 1 ຈັກເບີ 6, ນ້ຳງຽບ 2 ແລະ ເຊລະໝານ 3 ເຊິ່ງປະຈຸບັນແມ່ນດຳເນີນການ ໂດຍ ຝຟລ ແລະ ຍັງບໍ່ທັນໄດ້ໂອນໃຫ້ກຸ່ມບໍລິສັດ. ໂຄງການດັ່ງກ່າວຈະໂອນໄປຍັງກຸ່ມບໍລິສັດຫຼັງຈາກຂໍ້ຕົກລົງສຸດທ້າຍ ກ່ຽວກັບ ພັນທະ ແລະ ເງື່ອນໄຂໃນສັນຍາຂາຍໄຟ PPA ສຳເລັດ. ນະວັນທີລາຍງານ, ເງື່ອນໄຂທັງໝົດຍັງບໍ່ທັນສຳເລັດ.

6. ຊັບສິນບັດຄົງທີ່ມີຕົວຕົນ

	ແບບສັງລວມ						
	ອາຄານ ລ້ານກີບ	*ເຂື່ອນໄຟຟ້າ ລ້ານກີບ*	*ເຄື່ອງຈັກ ແລະ ອຸປະກອນ ລ້ານກີບ*	*ພາຫະນະ ລ້ານກີບ*	*ອຸປະກອນ, ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ*	*ຊັບສິນພວມກໍ່ສ້າງ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:							
ນະວັນທີ 1 ມັງກອນ 2025	799,926	6,894,634	4,753,998	42,530	32,320	585,290	13,108,698
ເພີ່ມຂຶ້ນ	374	-	7,438	3,817	755	8,077	20,461
ການໂອນຈາກຊັບສິນທີ່ພວມກໍ່ສ້າງ	3,566	-	242,411	-	-	(269,318)	(23,341)
ການດັດແກ້	16,443	(328,849)	303,007	6,045	3,354	-	-
ນະວັນທີ 30 ມິຖຸນາ 2025	820,309	6,565,785	5,306,854	52,392	36,429	324,049	13,105,818
ຄ່າຫຼຸ້ຍຫ້ຽນສະສົມ:							
ນະວັນທີ 1 ມັງກອນ 2025	473,850	2,418,608	2,469,262	22,898	22,238	-	5,406,856
ຫັກຄ່າຫຼຸ້ຍຫ້ຽນພາຍໃນໄລຍະ	13,835	120,409	128,115	2,757	1,868	-	266,984
ການດັດແກ້	2,195	(28,389)	20,647	3,440	2,107	-	-
ນະວັນທີ 30 ມິຖຸນາ 2025	489,880	2,510,628	2,618,024	29,095	26,213	-	5,673,842
ມູນຄ່າສຸດທິ							
ນະວັນທີ 1 ມັງກອນ 2025	326,076	4,476,026	2,284,736	19,632	10,082	585,290	7,701,842
ນະວັນທີ 30 ມິຖຸນາ 2025	330,429	4,055,157	2,688,830	23,297	10,216	324,049	7,431,978

6. ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

	ແບບແຍກກິດຈະການ						
	ທີ່ດິນ ແລະ ອາຄານ	*ເຂື່ອນໄຟຟ້າ*	*ເຄື່ອງຈັກ ແລະ ອຸປະກອນ*	*ພາຫະນະ*	*ອຸປະກອນ, ເຟີນີເຈີ ແລະ ເຄື່ອງຕິດຕັ້ງ*	*ຊັບສິນພວມກໍ່ສ້າງ*	*ລວມ*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ຕົ້ນທຶນ:							
ນະວັນທີ 1 ມັງກອນ 2025	799,925	6,894,635	4,704,702	36,810	30,938	537,590	13,004,600
ເພີ່ມຂຶ້ນໃນໄລຍະ	374	-	3,421	1,110	755	8,077	13,737
ການໂອນຈາກ ຊັບສິນທີ່ພວມກໍ່ສ້າງ	3,566	-	242,411	-	-	(269,318)	(23,341)
ການດັດແກ້	16,443	(328,849)	303,007	6,045	3,354	-	-
ນະວັນທີ 30 ມິຖຸນາ 2025	820,308	6,565,786	5,253,541	43,965	35,047	276,349	12,994,996
ຄ່າຫຼ້ຍຫ້ຽນສະສົມ:							
ນະວັນທີ 1 ມັງກອນ 2025	473,849	2,418,609	2,423,099	19,787	20,928	-	5,356,272
ຫັກຄ່າຫຼ້ຍຫ້ຽນພາຍໃນໄລຍະ	13,835	120,409	127,441	2,566	1,864	-	266,115
ການດັດແກ້	2,195	(28,389)	20,647	3,440	2,107	-	-
ນະວັນທີ 30 ມິຖຸນາ 2025	489,879	2,510,629	2,571,187	25,793	24,899	-	5,622,387
ມູນຄ່າສຸດທິ							
ນະວັນທີ 1 ມັງກອນ 2025	326,076	4,476,026	2,281,603	17,023	10,010	537,590	7,648,328
ນະວັນທີ 30 ມິຖຸນາ 2025	330,429	4,055,157	2,682,354	18,172	10,148	276,349	7,372,609

7. ເງິນລ່ວງໜ້າໃຫ້ຜູ້ຮັບເໝົາໂຄງການກໍ່ສ້າງ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ໂຄງການເຂື່ອນໄຟຟ້າ ນ້ຳປີ ພາວເວີ (*)	341,075	341,075	-	-
	341,075	**341,075**	**-**	**-**

(*) ເງິນລ່ວງໜ້າ ຈຳນວນ 41.39 ລ້ານໂດລາສະຫະລັດ ທຽບເທົ່າກັບ 341,075 ລ້ານກີບ ໃຫ້ກັບ ບໍລິສັດ ພາວເວີ ຊາຍນາ ເສີງຕຸ ເອັນຈີເນ່ຍລິ້ງ ຄໍອອເປີເລຊັ່ນ ຈຳກັດ (PCC) ສຳລັບໂຄງການກໍ່ສ້າງໂຄງການເຂື່ອນໄຟຟ້າ ນ້ຳປີ ພາວເວີ. ນະວັນທີ ຂອງບົດລາຍງານ, ໂຄງການແມ່ນຢູ່ໃນຂັ້ນຕອນສືບຕໍ່ການດຳເນີນງານ.

8. ເງິນສົດ ແລະ ທຽບເທົ່າເງິນສົດ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ເງິນຝາກທະນາຄານ	528,531	648,237	521,071	638,487
ເງິນສົດ	315	311	290	307
	528,846	**648,548**	**521,361**	**638,794**

9. ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ໜີ້ຕ້ອງຮັບທາງການຄ້າ	**443,915**	**319,336**	**443,915**	**319,336**
ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)	*443,915*	*319,336*	*443,915*	*319,336*
ໜີ້ຕ້ອງຮັບອື່ນໆ	**941,620**	**870,412**	**984,079**	**917,916**
ຈາກພາກສ່ວນພາຍນອກ	*11,425*	*12,939*	*4,625*	*4,670*
ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)	*930,195*	*857,473*	*979,454*	*913,246*
	1,385,535	**1,189,748**	**1,427,994**	**1,237,252**

10. ຊັບສິນໝຸນວຽນອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຂາດທຶນທີ່ບໍ່ເກີດຂຶ້ນຈິງຈາກອັດຕາ ແລກປ່ຽນ	7,808,212	7,645,274	7,809,731	7,644,729
ເງິນຈ່າຍລ່ວງໜ້າອາກອນກຳໄລ	31,875	31,875	31,875	31,875
ເງິນລ່ວງໜ້າສຳລັບສັນຍາປະກັນໄພ	25,714	8,286	25,714	8,286
ເງິນຝາກຄ้ำປະກັນ	2,307	2,307	2,307	2,307
ໜີ້ຕ້ອງຮັບອື່ນໆ	5,832	8,441	5,070	6,959
	7,873,940	**7,696,183**	**7,874,697**	**7,694,156**

11. ເງິນກູ້

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ເງິນກູ້ຢືມໄລຍະສັ້ນ	857,041	828,547	857,041	828,547
ເງິນກູ້ຢືມໄລຍະຍາວ, *ເງິນກູ້ໝຸນວຽນ ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)*	-	48,253	-	48,253
	-	*48,253*	-	*48,253*
ເງິນກູ້ຢືມໄລຍະຍາວ, *ເງິນກູ້ບໍ່ໝຸນວຽນ ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)*	-	32,168	-	32,168
	-	*32,168*	-	*32,168*
	857,041	**908,968**	**857,041**	**908,968**

ການກູ້ຢືມນີ້ແມ່ນເງິນກູ້ທີ່ບໍ່ມີຫຼັກຊັບຄ้ำປະກັນ. ລາຍລະອຽດຂອງການກູ້ຢືມ ນະວັນທີ 30 ມິຖຸນາ 2025 ມີດັ່ງນີ້:

ຜູ້ໃຫ້ກູ້ຢືມ	*ມູນຄ่า ລ້ານກີບ*	*ມູນຄ่າເດີມ*	*ສະກຸນເງິນ*	*ອັດຕາດອກ ເບ້ຍຕໍ່ປີ*	*ວັນທີຄົບกำหนด*
ກະຊວງການເງິນ	542,000	25,000,000	ໂດລາສະຫະລັດ	6.50%	30 ທັນວາ 2025
ກະຊວງການເງິນ	220,000	220,000,000,000	ກີບ	5.00%	30 ທັນວາ 2025
ທະນາຄານ ຮ่วมผัดทะนา จำกัด	82,541	125,000,000	ບາດ	9.00%	30 ມິຖຸນາ 2025
ທະນາຄານ ຫວຽດຕິນ ລາວ จำกัด	12,500	12,500,000,000	ກີບ	12.00%	05 ພະຈິກ 2025
	857,041				

12. ຮຸ້ນກູ້

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຮຸ້ນກູ້ໝຸນວຽນ	2,729,408	2,638,597	2,729,408	2,638,597
ຮຸ້ນກູ້ບໍ່ໝຸນວຽນ	12,242,564	12,089,537	12,242,564	12,089,537
	14,971,972	**14,728,134**	**14,971,972**	**14,728,134**
ຫັກ: ຕົ້ນທຶນທາງການເງິນ ລໍຖ້າສະສາງ	(75,808)	(94,693)	(75,808)	(94,693)
	14,896,164	**14,633,441**	**14,896,164**	**14,633,441**

ລາຍລະອຽດການເຄື່ອນໄຫວຂອງຮຸ້ນກູ້ມີດັ່ງລຸ່ມນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຍອດຍົກມາ	14,633,441	18,444,125	14,633,441	18,444,125
ການຊຳລະຄືນ	-	(4,843,461)	-	(4,843,461)
ຄ່າເສື່ອມມູນຄ່າທາງການເງິນ ທີ່ຫັກໄວ້	18,885	36,242	18,885	36,242
ຂາດທຶນຈາກການຕີມູນຄ່າ ສະກຸນເງິນຕາຕ່າງປະເທດ	243,838	996,535	243,838	996,535
	14,896,164	**14,633,441**	**14,896,164**	**14,633,441**

ສະຫຼຸບຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງຮຸ້ນກູ້ ນະວັນທີ 30 ມິຖຸນາ 2025 ແລະ 31 ທັນວາ 2024 ມີດັ່ງລຸ່ມນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ໜ້ອຍກວ່າ 1 ປີ	2,729,408	2,638,597	2,729,408	2,638,597
ຫຼາຍກວ່າ 1 ປີແຕ່ຕ່ຳກວ່າ 5 ປີ	9,915,297	9,839,701	9,915,297	9,839,701
ຫຼາຍກວ່າ 5 ປີ	2,327,267	2,249,836	2,327,267	2,249,836
	14,971,972	**14,728,134**	**14,971,972**	**14,728,134**
ຫັກ: ຕົ້ນທຶນທາງການເງິນລໍຖ້າຕັດຈາກບັນຊີ	(75,808)	(94,693)	(75,808)	(94,693)
	14,896,164	**14,633,441**	**14,896,164**	**14,633,441**

12. ຮຸ້ນກູ້ (ຕໍ່)

ຮຸ້ນກູ້ນີ້ແມ່ນຮຸ້ນກູ້ໄລຍະຍາວທີ່ບໍ່ມີຫຼັກຄ້ຳປະກັນທີ່ອອກໃຫ້ໃນ ຄະນະກຳມະການຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປະເທດໄທ (ກຕລ). ສະຫຼຸບຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງຮຸ້ນກູ້ ນະວັນທີ 30 ມິຖຸນາ 2025 ມີດັ່ງລຸ່ມນີ້:

	ຈຳນວນ ລ້ານກີບ	*ຈຳນວນ (ຫົວໜ່ວຍລ້ານ)*	*ສະກຸນ ເງິນ*	*ອັດຕາ ດອເບ້ຍ (%ຕໍ່ປີ)*	*ປີ*	*ອັດຕາ ດອເບ້ຍ ທີ່ຕ້ອງຊຳລະ*	*ວັນທີຄົບກຳນົດ*
2016-ຄັ້ງທີ 2	3,598,880	166.00	USD	5.59%	10	2 ຄັ້ງຕໍ່ປີ	2-ກັນຍາ-26
2016-ຄັ້ງທີ 3	2,059,600	95.00	USD	5.98%	12	2 ຄັ້ງຕໍ່ປີ	2-ກັນຍາ-28
2018-ຄັ້ງທີ 3	952,922	1,443.10	THB	4.85%	7	2 ຄັ້ງຕໍ່ປີ	12-ກໍລະກົດ-25
2018-ຄັ້ງທີ 4	1,253,240	1,897.90	THB	5.50%	10	2 ຄັ້ງຕໍ່ປີ	12-ກໍລະກົດ-28
2018-ຄັ້ງທີ 5	534,735	809.80	THB	6.00%	12	2 ຄັ້ງຕໍ່ປີ	12-ກໍລະກົດ-30
2018-ຄັ້ງທີ 6	1,070,527	1,621.20	THB	6.25%	15	2 ຄັ້ງຕໍ່ປີ	12-ກໍລະກົດ-33
2019-ຄັ້ງທີ 3	722,005	1,093.40	THB	6.50%	12	2 ຄັ້ງຕໍ່ປີ	29-ມັງກອນ-31
2021-ຄັ້ງທີ 3	1,776,486	2,690.30	THB	6.50%	4	ໄຕມາດ	22-ກັນຍາ-25
2022-ຄັ້ງທີ 1	642,105	972.40	THB	6.50%	4,6	ໄຕມາດ	7-ມັງກອນ-27
2023-ຄັ້ງທີ 1	1,643,892	2,489.50	THB	6.50%	3 ປີ ແລະ 10 ເດືອນ	ໄຕມາດ	30-ມັງກອນ-27
2023-ຄັ້ງທີ 2	426,771	646.30	THB	6.50%	3 ປີ ແລະ 8 ເດືອນ	ໄຕມາດ	25-ມັງກອນ-27
2023-ຄັ້ງທີ 2	90,729	137.40	THB	6.30%	3 ປີ	ໄຕມາດ	24-ສິງຫາ-26
2023-ຄັ້ງທີ 2	200,080	303.00	THB	6.90%	4 ປີ ແລະ 3 ເດືອນ	ໄຕມາດ	25-ພະຈິກ-27
	14,971,972						
ຫັກ: ຕົ້ນທຶນທາງ ການເງິນລໍຖ້າ ຕັດຈາກບັນຊີ	(75,808)						
ລວມ	**14,896,164**						

13. ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຮັບເງິນລ່ວງໜ້າຈາກກະຊວງການເງິນ (*)	3,459,353	4,055,748	3,459,353	4,055,748
ໜີ້ຕ້ອງສິ່ງການຄ້າໃຫ້ພາກສ່ວນທີ່ທີສາມ	545,302	556,340	527,656	538,694
ໜີ້ຕ້ອງສິ່ງການຄ້າ ແລະ ອື່ນໆໃຫ້ພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍເລກທີ 22)*	96,168	112,004	96,140	112,004
ໜີ້ຕ້ອງສິ່ງອື່ນໆ	895	1,281	665	743
	4,101,718	**4,725,373**	**4,083,814**	**4,707,189**

(*) ຮັບເງິນລ່ວງໜ້າຈາກກະຊວງການເງິນ ອີງຕາມບົດບັນທຶກຄວາມເຂົ້າໃຈກ່ຽວກັບກົນໄກການຄຸ້ມຄອງການຄ້ຳປະກັນຂອງກະຊວງການເງິນ, ລົງວັນທີ 29 ຕຸລາ 2024 ທີ່ກ່ຽວຂ້ອງກັບການຖອນຮຸ້ນໃນກິດຈະການຂອງບໍລິສັດຮຸ້ນສ່ວນ.

14. ລາຍຈ່າຍຄ້າງຈ່າຍ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ໜີ້ຕ້ອງສິ່ງລາຍຈ່າຍດອກເບ້ຍຮຸ້ນກູ້	256,600	233,503	256,600	233,503
ໜີ້ຕ້ອງສິ່ງລາຍຈ່າຍດອກເບ້ຍເງິນກູ້	852	73,238	852	73,238
ລາຍຈ່າຍຄ່າພາກຫຼວງຄ້າງຈ່າຍ	89,006	82,639	89,006	82,639
ໜີ້ຕ້ອງສິ່ງອາກອນອື່ນໆ	161,956	163,934	153,744	152,859
ອື່ນໆ	4,833	3,325	18	986
	513,247	**556,639**	**500,220**	**543,225**

15. ຮຸ້ນທຶນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ສາມັນ ຮຸ້ນ	*ມູນຄ່າ ລ້ານກີບ*	*ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ*	*ລວມຮຸ້ນທຶນ ທັງໝົດ ລ້ານກີບ*
ນະວັນທີ 31 ທັນວາ 2024	1,679,303,697	6,717,215	985,621	7,702,836
ອອກຮຸ້ນເພີ່ມ	-	-	-	-
ນະວັນທີ 30 ມິຖຸນາ 2025	**1,679,303,697**	**6,717,215**	**985,621**	**7,702,836**

ຈຳນວນຮຸ້ນສາມັນທີ່ໄດ້ຈົດທະບຽນທັງໝົດແມ່ນ 1,679,303,697 ຮຸ້ນ, ມູນຄ່າກຳນົດ 4,000 ກີບຕໍ່ຮຸ້ນ. ນະວັນທີ 30 ມິຖຸນາ 2025 ແລະ ວັນທີ 31 ທັນວາ 2024, ຮຸ້ນທັງໝົດແມ່ນໄດ້ຊຳລະຄົບ ແລະ ໄດ້ຈົດທະບຽນກັບກະຊວງ ອຸດສາຫະກຳ ແລະ ການຄ້າ.

16. ຕົ້ນທຶນການຂາຍ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ເງິນເດືອນ ແລະ ສະຫວັດດີການອື່ນໆ	22,996	14,579	22,996	14,579
ຄ່າວັດສະດຸ, ການສ້ອມແປງ ແລະ ບຳລຸງຮັກສາ	8,106	10,731	8,106	10,731
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	266,115	261,520	266,115	261,520
ຄ່າພາກຫຼວງ	6,975	4,439	6,975	4,439
ຄ່າປະກັນໄພເຂື່ອນ	12,852	6,728	12,852	6,728
ອື່ນໆ	10,467	7,310	10,467	7,310
	327,511	**305,307**	**327,511**	**305,307**

17. ລາຍຮັບອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ລາຍຮັບດອກເບ້ຍ	2,700	4,838	3,285	4,838
ລາຍຮັບອື່ນໆຈາກການບໍລິການ (*)	102,471	81,526	61,412	47,301
ລາຍຮັບອື່ນໆ	233	-	233	-
	105,404	**86,364**	**64,930**	**52,139**

(*) ຄ່າບໍລິການ ສະແດງເຖິງຄ່າບໍລິການຄຸ້ມຄອງຂອງເຂື່ອນໃຫ້ແກ່ບໍລິສັດທີ່ກ່ຽວຂ້ອງ.

18. ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ເງິນເດືອນ ແລະ ສະຫວັດດີການອື່ນໆ	61,500	64,557	40,634	43,577
ຄ່າບໍລິການພາຍນອກ	71,870	23,694	67,855	13,847
ລາຍຈ່າຍຄ່ານ້ຳມັນ ແລະ ຄ່າຂົນສົ່ງ	8,347	11,117	8,339	10,654
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	869	358	-	-
ລາຍຈ່າຍອື່ນໆ	32,284	12,810	19,755	7,782
	174,870	**112,536**	**136,583**	**75,860**

19. ຕົ້ນທຶນທາງການເງິນ

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ລາຍຈ່າຍດອກເບ້ຍຈາກ:				
ຮຸ້ນກູ້	459,426	613,380	459,426	613,380
ເງິນກູ້ຈາກພາກສ່ວນທີ່ກ່ຽວຂ້ອງ	1,097	-	1,097	-
ເງິນກູ້ຈາກສະຖາບັນການເງິນ	55,512	40,538	55,512	40,526
	516,035	**653,918**	**516,035**	**653,906**

20. ລາຍຈ່າຍອາກອນກຳໄລ

ອີງຕາມສັນຍາສຳປະທານກັບລັດຖະບານລາວ, ບໍລິສັດມີພັນທະຈະຕ້ອງເສຍອາກອນລາຍໄດ້ສຸດທິຂອງຕົນ ໃນອັດຕາ (10%) ຂອງກຳໄລສຸດທິຫຼັງຈາກການດັດແກ້ສຳລັບລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຮັບທາງອາກອນ ແລະ ລາຍການທີ່ບໍ່ອະນຸຍາດທີ່ບໍ່ອະນຸຍາດເປັນລາຍຈ່າຍທາງອາກອນ ແລະ ອື່ນໆຕາມກົດໝາຍວ່າດ້ວຍສ່ວຍສາອາກອນຂອງ ສປປ ລາວ.

ກຸ່ມບໍລິສັດບໍ່ໄດ້ຮັບຮູ້ຜົນຕ່າງຊື່ວຄາວໃນອະນາຄົດຂອງໜີ້ຕ້ອງສິ່ງ ຫຼື ໜີ້ຕ້ອງຮັບທາງອາກອນລາຍໄດ້. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຕາມໄລຍະ ແລະ ກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ຂອງ ສປປ ລາວ.

20. ລາຍຈ່າຍອາກອນກຳໄລ (ຕໍ່)

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ກຳໄລ/(ຂາດທຶນ) ທາງບັນຊີ ກ່ອນອາກອນ	**534,980**	**(11,539)**	**531,403**	**28,817**
ດັດແກ້ເພີ່ມຂຶ້ນ/(ຫຼຸດລົງ)				
ລາຍຮັບອື່ນໆທີ່ຖືກຍົກເວັ້ນ	-	(52,275)	-	(52,275)
ສ່ວນແບ່ງກຳໄລຈາກການລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	(813,812)	(299,433)	(813,812)	(299,433)
ລາຍຈ່າຍທີ່ບໍ່ສາມາດຫັກເປັນ ລາຍຈ່າຍ	13,584	1,779	12,579	2,045
ການດັດແກ້ຂາດທຶນສຸດທິກ່ອນ ອາກອນ ແລະ ຂາດທຶນຍົກຍອດມາ	**(265,248)**	**(361,469)**	**(269,830)**	**(320,847)**
ຂາດທຶນທາງອາກອນຍົກຍອດມາ	-	-	-	-
ຄາດຄະເນຂາດທຶນທາງອາກອນ	**(265,248)**	**(361,469)**	**(269,830)**	**(320,847)**
ລວມມີ:				
(ຂາດທຶນ)/ກຳໄລຈາກບໍລິສັດ	(265,248)	(361,469)	(269,830)	(320,847)
ລາຍຈ່າຍອາກອນກຳໄລທີ່ຖືກຮັບຮູ້ ໃນໃບລາຍງານຜົນການດຳເນີນງານ	928	1,489	-	-

ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ ເລກທີ 67/ສພຊ , ລົງວັນທີ 18 ມິຖຸນາ 2019, ມາດຕາ 23, ການຂາດທຶນປະຈຳປີທີ່ໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ບໍລິສັດກວດສອບເອກະລາດ ແລະ ຮັບຮູ້ໂດຍອົງການສ່ວຍສາອາກອນແມ່ນມີສິດໄດ້ຮັບການປະຕິບັດເພື່ອຊົດເຊີຍຜົນກຳໄລທາງອາກອນໃນອະນາຄົດໃນໄລຍະ 5 ປີ ຫຼັງຈາກເກີດການຂາດທຶນ. ມາຮອດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ລວມການຂາດທຶນອາກອນສະສົມ.

ແບບສັງລວມ

ປີກຳເນີດ	*ສາມາດນຳໃຊ້ເຖິງ*	*ຈຳນວນການສູນເສຍອາກອນ ລ້ານກີບ*	*ໄດ້ນຳໃຊ້ເຖິງ ວັນທີ 30 ມິຖຸນາ 2025 ລ້ານກີບ*	*ຖືກຍຶດ ຊັບສິນ ລ້ານກີບ*	*ບໍ່ໄດ້ນຳໃຊ້ໃນວັນທີ 30 ມິຖຸນາ 2025 ລ້ານກີບ*
2023 (*)	2028	2,002,345	-	-	2,002,345
2024 (*)	2029	3,233,596	-	-	3,233,596
30 ມິຖຸນາ 2025 (*)	2030	276,760	-	-	276,760
		5,512,701	**-**	**-**	**5,512,701**

20. ລາຍຈ່າຍອາກອນກຳໄລ (ຕໍ່)

			ແບບແຍກຕ່າງຫາກ		
ປີກຳເນີດ	*ສາມາດນຳໃຊ້ເຖິງ*	*ຈຳນວນການສູນເສຍອາກອນ ລ້ານກີບ*	*ໄດ້ນຳໃຊ້ເຖິງ ວັນທີ 30 ມິຖຸນາ 2025 ລ້ານກີບ*	*ຖືກຍົດຊັບສິນ ລ້ານກີບ*	*ບໍ່ໄດ້ນຳໃຊ້ໃນວັນທີ 30 ມິຖຸນາ 2025 ລ້ານກີບ*
2023 (*)	2028	2,021,286	-	-	2,021,286
2024 (*)	2029	3,243,556	-	-	3,243,556
30 ມິຖຸນາ 2025 (*)	2030	281,342	-	-	281,342
		5,546,184	**-**	**-**	**5,546,184**

(*) ນະວັນທີຂອງເອກະສານລາຍງານການເງິນ, ການປະເມີນອາກອນໃນໄລຍະດັ່ງກ່າວຍັງບໍ່ທັນໄດ້ກຳນົດຈາກເຈົ້າໜ້າທີ່ສ່ວຍສາອາກອນ.

21. ຜົນຖານກຳໄລຕໍ່ຮຸ້ນ

ການຄິດໄລ່ຜົນຖານກຳໄລຕໍ່ຮຸ້ນ 30 ມິຖຸນາ 2025 ແລະ 2024 ແມ່ນອີງໃສ່ຜົນກຳໄລສຳລັບງວດທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງ ບໍລິສັດ ແລະ ຍອດເຫຼືອຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກທີ່ອອກຈຳໜ່າຍດັ່ງນີ້:

	ແບບສັງລວມ		*ແບບແຍກຕ່າງຫາກ*	
	30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ກຳໄລ/(ຂາດທຶນ)ທີ່ສາມາດຈັດສັນໄດ້ໃຫ້ແກ່ຜູ້ຖືຮຸ້ນສາມັນ *(ລ້ານກີບ)*	534,064	(10,294)	531,403	28,817
ຈຳນວນຮຸ້ນສາມັນທີ່ໄດ້ຈຳໜ່າຍອອກ *(ລ້ານຮຸ້ນ)*	1,679	1,679	1,679	1,679
ລາຍໄດ້ຕໍ່ຮຸ້ນ	**318**	**(6.13)**	**316**	**17.16**

22. ພາກສ່ວນທີ່ກ່ຽວຂ້ອງ

ຂໍ້ຕົກລົງທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ສາມາດສະຫຼຸບໄດ້ດັ່ງນີ້:

ຂໍ້ຕົກລົງການຊື້ພະລັງງານ (*"PPA"*)

ໃນວັນທີ 15 ທັນວາ 2010 ແລະ ການແກ້ໄຂໃນວັນທີ 9 ທັນວາ 2011, ກຸ່ມບໍລິສັດໄດ້ຊັ້ນສັນຍາການຊື້ - ຂາຍໄຟ ("PPA") ກັບ ໄຟຟ້າລາວ. ສັນຍາດັ່ງກ່າວ PPA ກຳນົດໄລຍະເວລາ 30 ປີພ້ອມກັບໄລຍະເວລາຕໍ່ອາຍຸ 10 ປີເຊິ່ງເປັນໄລຍະເວລາດຽວກັນກັບສັນຍາສຳປະທານ.

ແຫຼ່ງລາຍຮັບຫຼັກແມ່ນມາຈາກການຂາຍໄຟຟ້າໃຫ້ ຟຟລ ອີງຕາມສັນຍາການຊື້ - ຂາຍໄຟຟ້າທີ່ຜະລິດຈາກຊັບສິນທີ່ມີຢູ່, ການຂາຍໄຟຟ້າຈະຂຶ້ນຢູ່ກັບອັດຕາໄຟຟ້າຕາມທີ່ໄດ້ຕົກລົງກັນກັບ ຟຟລ ເຊິ່ງໄດ້ກຳນົດໄວ້ໃນສັນຍາການຊື້ - ຂາຍໄຟຟ້າທີ່ກ່ຽວຂ້ອງສຳລັບແຕ່ລະຊັບສິນການຜະລິດທີ່ມີຢູ່.

22. ພາກສ່ວນທີ່ກ່ຽວຂ້ອງ

ຂໍ້ຕົກລົງການຊຳລະຄືນຫນີ້ສິນ

ກຸ່ມບໍລິສັດ ໄດ້ລົງນາມໃນສັນຍາການຊຳລະໜີ້ ("ສັນຍາ") ກັບ ຟຟລ. ຟຟລ ເປັນຜູ້ກູ້ຢືມຕາມຂໍ້ຕົກລົງກູ້ຢືມຫຼາຍສະບັບ ກັບ ລັດຖະບານແຫ່ງ ສປປ ລາວ ("ລັດຖະບານ") ເຊິ່ງເງິນຈຳນວນດັ່ງກ່າວໄດ້ສະໜອງຈາກຜູ້ໃຫ້ກູ້ຫຼາຍລາຍ ໂດຍຜ່ານລັດຖະບານ ລາວ. ນອກຈາກການໂອນຊັບສິນແລ້ວ, ກຸ່ມບໍລິສັດຍັງໄດ້ຕົກລົງກັບ ໄຟຟ້າລາວ ວ່າກຸ່ມບໍລິສັດຈະຊຳລະໜີ້ທີ່ຍັງຄ້າງໃຫ້ ໄຟຟ້າ ລາວ ແລະ ໄຟຟ້າລາວຈະຊຳລະໜີ້ດັ່ງກ່າວໃຫ້ກັບ ລັດຖະບານ, ເພື່ອເປັນການຊຳລະຄືນຂອງ ລັດຖະບານ ໃຫ້ກັບຜູ້ກູ້ຢືມຕາມ ສັນຍາກູ້ຢືມເດີມ. ເງິນກູ້ເຫຼົ່ານີ້ບໍ່ມີຫຼັກຄ້ຳປະກັນ ແລະ ບໍ່ມີພັນທະອື່ນນອກເໜືອໄປຈາກການຊຳລະຄືນຕາມກຳນົດເວລາທີ່ໄດ້ ຕົກລົງກັນ.

ຂໍ້ຕົກລົງການບໍລິການຄຸ້ມຄອງ ແລະ ການບຳລຸງຮັກສາ

ບໍລິສັດໄດ້ເຊັນສັນຍາການບໍລິການດ້ານການກໍ່ສ້າງ ແລະ ບຳລຸງຮັກສາອາຄານ ແລະ ຫ້ອງການ, ການກໍ່ສ້າງສາຍສົ່ງ ແລະ ອື່ນໆ ກັບຜູ້ສະໜອງຫຼາຍພາກສ່ວນ.

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ວັນທີ 30 ມິຖຸນາ 2024 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກຕ່າງຫາກ*	
		30 ມິຖຸນາ 2025 ລ້ານກີບ	*30 ມິຖຸນາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*30 ມິຖຸນາ 2024 ລ້ານກີບ*
ລັດວິສາຫະກິດ ໄຟຟ້າລາວ	ຂາຍໄຟຟ້າພາຍໃນ ປະເທດ	653,625	443,875	653,625	443,875
	ລາຍຈ່າຍດອກເບ້ຍ	1,097	-	1,097	-
	ຈ່າຍເງິນປັນຜົນ	38,568	-	38,568	-
ບໍລິສັດນ້ຳງື່ມ 2 ພາວເວີ ຈຳກັດ	ຮັບເງິນປັນຜົນ *(ບົດອະທິບາຍເລກທີ 4.2)*	48,500	32,266	48,500	32,266
ບໍລິສັດເຫີນ ຫີນບູນ ພາວເວີ ຈຳກັດ	ຮັບເງິນປັນຜົນ *(ບົດອະທິບາຍເລກທີ 4.3)*	694,008	-	694,008	-
ບໍລິສັດຫ້ວຍເຫາະ ພາວເວີ ຈຳກັດ	ຮັບເງິນປັນຜົນ *(ບົດອະທິບາຍເລກທີ 4.3)*	22,819	20,010	22,819	20,010
ບໍລິສັດນ້ຳລີກ 1 ພາວເວີ ຈຳກັດ	ການບໍລິການຄຸ້ມຄອງ	9,864	7,658	-	-
ບໍລິສັດເຫີນ ຫີນບູນ ພາວເວີ ຈຳກັດ	ການບໍລິການຄຸ້ມຄອງ	257	254	-	-
ບໍລິສັດ ອີແອນອີ ເອັນຈີເນຍຣິ່ງ ແອນ ເຊີວິດສ ຈຳກັດ	ການບໍລິການຄຸ້ມຄອງ	21,018	18,852	-	-

ການຂາຍໄຟຟ້າໃຫ້ ລັດວິສາຫະກິດ ໄຟຟ້າລາວ ແມ່ນອີງໃສ່ອັດຕາ ແລະເງື່ອນໄຂທີ່ໄດ້ຕົກລົງກັນ.

22. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດຄົງຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2025 ແລະ ວັນທີ 31 ທັນວາ 2024 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກກິດຈະການ*	
		30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ເງິນລ່ວງໜ້າ (ບົດອະທິບາຍເລກທີ 5)					
ຟຟລ	ບໍລິສັດແມ່	1,973,407	1,973,407	1,973,407	1,973,407
ອີດີແອວເຈັນ ໂອແອນເອັມ	ບໍລິສັດໃນເຄືອ	-	-	7,025	7,025
		1,973,407	**1,973,407**	**1,980,432**	**1,980,432**
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ (ບົດອະທິບາຍເລກທີ 9)					
ໜີ້ຕ້ອງຮັບການຄ້າ					
ຟຟລ	ບໍລິສັດແມ່	443,915	319,336	443,915	319,336
ໜີ້ຕ້ອງຮັບອື່ນໆ					
ຟຟລ	ບໍລິສັດແມ່	779,970	710,872	779,970	710,872
ນ້ຳປີ ອີດີແອວເຈັນ	ບໍລິສັດໃນເຄືອ	-	-	30,455	30,537
ໂອແອນເອັມ	ບໍລິສັດໃນເຄືອ	-	-	43,851	49,362
ນ້ຳເທີນ 1 (*) ບໍລິສັດນ້ຳລີກ 1	ບໍລິສັດຮຸ້ນສ່ວນ	125,178	122,475	125,178	122,475
ພາວເວີ ຈຳກັດ ບໍລິສັດເທີນຫີນບຸນ	ບໍລິສັດຮຸ້ນສ່ວນ	5,399	1,993	-	-
ພາວເວີ ຈຳກັດ ບໍລິສັດ ອີແອນອີ ເອັນຈີເນຍຣິ່ງ ແອນ ເຊີວິດສ ຈຳກັດ	ບໍລິສັດຮຸ້ນສ່ວນ	94	47	-	-
	ບໍລິສັດຮຸ້ນສ່ວນ	19,554	22,086	-	-
		930,195	**857,473**	**979,454**	**913,246**

(*) *ສັນຍາກູ້ຢືມຂອງຜູ້ຖືຮຸ້ນ*

ໃນວັນທີ 9 ທັນວາ 2022, ກຸ່ມບໍລິສັດໄດ້ເຊັນສັນຍາກູ້ຢືມໄລຍະຍາວໃຫ້ແກ່ບໍລິສັດໄຟຟ້ານ້ຳເທີນ 1 ຈຳກັດ ໂດຍມີວົງເງິນກູ້ຢືມ 6.3 ລ້ານ ໂດລາສະຫະລັດ ຈຸດປະສົງເພື່ອແມ່ໃສ່ພັດທະນາ ແລະ ດຳເນີນໂຄງການ. ເງິນກູ້ມີອັດຕາດອກເບ້ຍເທົ່າກັບ SOFR ບວກ 2% ຕໍ່ປີ.

22. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກກິດຈະການ*	
		30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ (ເອກະສານເລກທີ 13)					
ຟຟລ	ບໍລິສັດແມ່	-	486	-	486
ນ້ຳລອງ	ວິສະຫະກິດຂາຮຸ້ນ	-	14,256	-	14,256
ນ້ຳດີກ 1-2	ວິສະຫະກິດຂາຮຸ້ນ	96,168	97,262	96,140	97,262
		96,168	**112,004**	**96,140**	**112,004**
ເງິນກູ້ຢືມໄລຍະຍາວ (ເອກະສານເລກທີ 11)					
ຟຟລ	ບໍລິສັດແມ່				
- ເງິນກູ້ໜຸນວຽນ		-	48,253	-	48,253
- ເງິນກູ້ບໍ່ໜຸນວຽນ		-	32,168	-	32,168
		-	**80,421**	**-**	**80,421**

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວຈາກພາກທີ່ສ່ວນກ່ຽວຂ້ອງສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	30 ມິຖຸນາ 2025 ລ້ານກີບ	*31 ທັນວາ 2024 ລ້ານກີບ*	*30 ມິຖຸນາ 2025 ລ້ານກີບ*	*31 ທັນວາ 2024 ລ້ານກີບ*
ຍອດຍົກມາ	80,421	58,039	80,421	58,039
ການຫັກລ້າງ	(78,628)	-	(78,628)	-
ຜົນກະທົບຈາກການຕີມູນຄ່າສະກຸນເງິນຄືນໃໝ່	(1,793)	22,382	(1,793)	22,382
ຍອດຄົງເຫຼືອ	**-**	**80,421**	**-**	**80,421**

23. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີອອກເອກະສານລາຍງານການເງິນ

ວັນທີ 16 ກໍລະກົດ 2025, ບໍລິສັດ ແລະ ຟຟລ ໄດ້ບັນລຸຂໍ້ຕົກລົງ ໂດຍບໍລິສັດຈະໄດ້ຈ່າຍຄືນເງິນລ່ວງໜ້າທີ່ກ່ຽວຂ້ອງກັບຊັບສິນທີ່ກຳລັງກໍ່ສ້າງ (ບົດອະທິບາຍ 5) ແລະ ການລົງທຶນໃນວິສາຫະກິດຂາຮຸ້ນ (ບົດອະທິບາຍ 4.3), ກ່ຽວກັບ 4 ໂຄງການເຂື່ອນໄຟຟ້າຄື: ນ້ຳຈຽມ; ນ້ຳງື່ມ 1 ຈັ້ນເປ 6, 7, ແລະ 8; ນ້ຳຫີນບູນ; ແລະ ຫ້ວຍລຳພັນຕອນລຸ່ມ.

ນອກຈາກທີ່ໄດ້ເປີດເຜີຍໄວ້ໃນເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການ, ບໍ່ມີບັນຫາ ຫຼື ເຫດການທີ່ເກີດຂຶ້ນຕັ້ງແຕ່ວັນທີ 30 ມິຖຸນາ 2025 ທີ່ຕ້ອງດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນກາງປີແບບສັງລວມ ແລະ ແບບແຍກກິດຈະການຂອງບໍລິສັດ.

ທ່ານ ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025